# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ສິງຫາ 2025
ປີທີ 14
ສະບັບທີ 1028
ລາຍສັປະດາ


## ປະທານສະພາແຫ່ງຊາດຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຜູ້ບັນຊາການທະຫານສູງສຸດໄທ



(ສພຊ) - ວັນທີ 21 ກໍລະກົດຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ພົອ. ຊົງວິດ ໜູນພັກດີ ຜູ້ບັນຊາການທະຫານສູງສຸດ ແຫ່ງ ລາຊະອານາຈັກໄທ ພ້ອມດ້ວຍຄະນະ ເນື່ອງໃນໂອກາດມາຢ້ຽມຢາມ ແລະເຮັດວຽກຢູ່ສປປລາວຢ່າງເປັນທາງການ ແນໃສ່ປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື

ອ່ານຕໍ່ໜ້າ 8

## ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ແລະ ປະກາດແຕ່ງຕັ້ງຕຳແໜ່ງບໍລິຫານຈຳນວນໜຶ່ງ



(ສພຊ) - ຕອນບ່າຍວັນທີ 23 ກໍລະກົດຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດພິທີເຜີຍແຜ່, ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ສະໄໝທີ XI ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີບັນດາສະຫາຍໃນຄະນະປະຈຳພັກ, ຄະນະບໍລິຫານງານພັກ, ເລຂາ ແລະ ຮອງເລຂາບັນດາຮາກຖານ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຮອງລັດຖະມົນຕີຜູ້ທີໜຶ່ງກະຊວງການຕ່າງປະເທດກູບາ



(ສພຊ) - ວັນທີ 25 ກໍລະກົດຜ່ານມາ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເຈຣາຣ໌ໂດ ເປຢາລເບຣ໌ ພໍຣ໌ທັລ (Gerardo PeñalverPortal) ຮອງລັດຖະມົນຕີຜູ້ທີໜຶ່ງກະຊວງການຕ່າງປະເທດ ແຫ່ງ ສ.ກູບາ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ສປປລາວ ແລະ ບັນດາປະເທດໃນຂົງເຂດອາຊີ.

ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະຕີລາຄາສູງຕໍ່ການຢ້ຽມຢາມ ແລະເຮັດວຽກຢູ່ສປປລາວຂອງຄະນະໃນຄັ້ງນີ້ເຊິ່ງເປັນການເພີ່ມທະວີການພົວພັນ, ຊຸກຍູ້ການຮ່ວມມືແລະການແລກປ່ຽນຄະ

ອ່ານຕໍ່ໜ້າ 9

## ສພຊ ສະຫຼຸບວຽກງານກວດກາ ປີ 2024



(ສພຊ) - ວັນທີ 25 ກໍລະກົດຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ2025ຂອງຄະນະກວດກາພັກ-ລັດສະພາແຫ່ງຊາດ, ເຜີຍແຜ່ເຊື່ອມຊຶມເອກະສານຜົນສຳເລັດຂອງກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2024 ແລະ ເຜີຍແຜ່ເອກະສານແຈ້ງຊັບສິນລາຍຮັບຂອງພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ປະ

ອ່ານຕໍ່ໜ້າ 8

## ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ

(ສພຊ) - ວັນທີ 24 ກໍລະກົດຜ່ານມາ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ (ສພຊ), ສະມາຊິກສະພາແຫ່ງຊາດ (ສສຊ) ປະ

ອ່ານຕໍ່ໜ້າ 9






ການສຶກສາອົບຮົມນັ້ນ ຕ້ອງເອົາວຽກຈິງຄົນແທ້ ມາພິສູດໃຫ້ເຫັນຄັກແນ່ ຕ້ອງຍົກບັນຫາຂຶ້ນມາເຈາະຈີ້ມ ເພື່ອໃຫ້ປະຊາຊົນຄົ້ນຄິດ ແລະ ອີງໃສ່ຄວາມເຫັນຂອງປະຊາຊົນ ເພື່ອອະທິບາຍຄືນເຮັດໃຫ້ເຂົ້າໃຈງ່າຍ, ໝາຍຄວາມວ່າ: "ຕ້ອງເກົາໃຫ້ຖືກບ່ອນຄັນ".

(ປຶ້ມສັງລວມບົດໂອ້ລົມຂອງທ່ານ ໄກສອນ ພົມວິຫານ ຕໍ່ຂັ້ນທ້ອງຖິ່ນ (ສມປຊ) ນະຄອນຫຼວງວຽງຈັນ ປີ 2019, ໜ້າ 311)

ດ້ວຍໄຊຊະນະໃນຄັ້ງນີ້ ປະຊາຊົນລາວໄດ້ລົບລ້າງແອກແຫ່ງການຄອບຄອງລ່າເມືອງຂຶ້ນ ທີ່ເຕັງຄໍປະຊາຊົນເຮົາມາເປັນເວລາ 80 ກວ່າປີ ນັ້ນ ລົງຢ່າງສິ້ນເຊີງ, ຍຸດຕິໄລຍະເຈັບແສບຂອງຊາດເຮົາ, ສຳເລັດການປະຕິວັດຊາດປະຊາທິປະໄຕໂດຍພື້ນຖານ ພາປະຊາຊົນບັນດາຊົນຊາດໃນປະເທດເຮົາ ຈາກຊາຕາກຳທີ່ເປັນຂ້ອຍຂ້າ ສູ່ຖານະເປັນເຈົ້າຂອງປະເທດຊາດ, ເປັນເຈົ້າສັງຄົມ.

(ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ວັນທີ 2 ທັນວາ 1975, ໜ້າ 482)

ອ່ານຕໍ່ສະບັບໜ້າ









ອາຫານທີ່ບໍ່ຄວນກິນ... (ໜ້າ 9)




EU ອະນຸມັດ... (ໜ້າ 11)




ນະໂຍບາຍປ້ອງກັນສະກຸນເງິນ... (ໜ້າ 12)

**ຂໍ່ານັບຊົມເຊີຍວັນສື່ມວນຊົນແຫ່ງຊາດ ແລະ ການພິມຈຳໜ່າຍ ແລະ ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 75 ປີ (13/8/1991-13/8/2025) ຢ່າງສຸດໃຈ!**

# ຮຽບຮຽງເນື້ອໃນກົດໝາຍສາມັນສຶກສາ



(ສພຊ)-ວັນທີ21-22 ກໍລະກົດນີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍສາມັນສຶກສາ (ສ້າງໃໝ່) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານແລະຮອງປະທານກຳມາທິການທີ່ກ່ຽວຂ້ອງພາຍໃນ ສພຊ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຄະນະຮັບຜິດຊອບປັບປຸງກົດໝາຍ ພ້ອມດ້ວຍຄະນະກົມ, ພະແນກ ແລະ ພະນັກງານທີ່ກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນຕໍ່ທີ່ປະຊຸມ ເຊິ່ງທ່ານກ່າວວ່າ: ກົດໝາຍວ່າດ້ວຍສາມັນສຶກສາ ໄດ້ຖືກພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນບ່າຍຂອງວັນທີ 25 ມິຖຸນາ 2025 ດ້ວຍຄະແນນສຽງເຫັນດີຫຼາຍກວ່າ 92%; ແຕ່ເຖິງຢ່າງໃດກໍຕາມ, ກົດໝາຍສະບັບນີ້ ມີສະມາຊິກສະພາແຫ່ງຊາດ35ທ່ານໄດ້ປະກອບຄຳເຫັນໃສ່42ມາດຕາ ກວມເອົາ 93 ເນື້ອໃນ. ສະນັ້ນ, ກອງປະຊຸມຮຽບຮຽງຄັ້ງນີ້ຈະໄດ້ສຸມໃສ່ຄົ້ນຄວ້າຢ່າງລະອຽດ ແລະ ເລິກເຊິ່ງ ເພື່ອເລືອກເຟັ້ນເອົາຄຳເຫັນຂອງຜູ້ແທນມາປັບປຸງໃສ່ເນື້ອໃນກົດໝາຍ ແລະ ເນື່ອງຈາກເປັນການຮຽບຮຽງຄັ້ງສຸດທ້າຍ ນອກຈາກຄຳເຫັນຂອງຜູ້ແທນແລ້ວ ເຫັນວ່າຍັງມີຈຸດໃດ, ຄຳສັບຄຳເວົ້າໃດ ທີ່ບໍ່ທັນຈະແຈ້ງ ແລະ ສອດຄ່ອງ ກໍສາມາດຍົກຂຶ້ນຕື່ມ ເພື່ອເຮັດໃຫ້ຮ່າງກົດໝາຍສະບັບນີ້ ມີເນື້ອໃນຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສົມບູນ ກ່ອນນຳສະເໜີປະທານສະພາແຫ່ງຊາດລົງລາຍເຊັນ.

**(ສອນສັກ ວັນວິໄຊ)**



# ສະຫຼຸບການປະຕິບັດໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ ສພຊ



(ສພຊ) - ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດໂຄງການການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ (ສພຊ) ໃນວຽກງານການຄົ້ນຄວ້າແລະການປັບປຸງນິຕິກຳ ໄດ້ຈັດຂຶ້ນເມື່ອວັນສຸກທີ 25 ກໍລະກົດຜ່ານມາ ທີ່ໂຮງແຮມ Double Tree by Hilton ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ເຊິ່ງມີບັນດາທ່ານປະທານ ແລະ ຮອງປະທານສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ, ຊຽງຂວາງ, ບໍລິຄຳໄຊແລະສະຫວັນນະເຂດ; ທ່ານ ນາງ ຮາລິອຸນໂກ ກັນບັດ (Khaliungoo Ganbat) ຮັກສາການຜູ້ຕາງໜ້າມູນນິທິເອເຊຍປະຈຳສປປລາວ; ບັນດາທ່ານຕາງໜ້າກົງຈັກການຈັດຕັ້ງທີ່ກ່ຽວຂ້ອງພາຍໃນສພຊ, ກົມອົງການຈັດຕັ້ງສາກົນກະຊວງການຕ່າງປະເທດ, ກະຊວງການຕ່າງປະເທດ ແລະ ການຄ້າຂອງນູແວນເຊລັງ, ກະຊວງການຕ່າງປະເທດ ແລະ ການຄ້າຂອງອົດສະຕຣາລີ, ອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດພ້ອມດ້ວຍແຂກຖືກເຊີນ.

ທ່ານ ນາງ ຮາລິອຸນໂກ ກັນບັດ ໄດ້ລາຍງານຜົນການຈັດຕັ້ງປະຕິບັດ ແລະ ຜົນສຳເລັດຂອງໂຄງການນັບແຕ່ປີ2020-2025 ເຊິ່ງທ່ານໃຫ້ຮູ້ວ່າ: ຕະຫຼອດໄລຍະເວລາເກືອບ 5 ປີຂອງການດຳເນີນງານ, ໂຄງການໄດ້ສ້າງຄວາມປ່ຽນແປງ ແລະ ສາມາດບັນລຸຈຸດປະສົງຂອງໂຄງການໄດ້ຫຼາຍດ້ານ ຄື: 1) ຂີດຄວາມສາມາດຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ)ໃນການຈັດຕັ້ງປະຕິບັດ 3 ພາລະບົດບາດ ໄດ້ຮັບການຍົກລະດັບ ແລະ ສາມາດນຳໄປໃຊ້ໄດ້ຢ່າງແທ້ຈິງ; 2) ພະນັກງານຂອງ ສພຊ ແລະ ສພຂ ໄດ້ຮັບການຍົກລະດັບຂີດຄວາມສາມາດ ເພື່ອສະໜັບສະໜູນ ສສຊ ແລະ ສສຂ ໃນການຈັດຕັ້ງປະຕິບັດ3ພາລະບົດບາດໃນຂົງເຂດຍຸດທະສາດທີ່ສຳຄັນ; 3) ຂີດຄວາມສາມາດທາງດ້ານການຄົ້ນຄວ້ານິຕິກຳ, ການຄົ້ນຄວ້າວຽກງານລັດຖະສະພາແລະແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຮັບການຍົກລະດັບ ຄຽງຄູ່ກັບການສ້າງ ແລະ ແປປຶ້ມຄູ່ມືດ້ານວຽກງານຕ່າງໆທີ່ຈຳເປັນ; 4) ດ້ວຍການຂະຫຍາຍການສະໜັບສະໜູນໄປຍັງສພຂເຮັດໃຫ້ພາລະບົດບາດຂອງ ສພຂ ໄດ້ຮັບການຍົກສູງ ໂດຍສະເພາະດ້ານການຕິດຕາມກວດກາແລະການຍົກສູງນິຕິກຳ; 5) ຄຸນນະພາບຂອງບັນດາກົດໝາຍ ແລະ ນະໂຍບາຍຕ່າງໆ ທີ່ນຳເຂົ້າພິຈາລະນາໃນກອງປະຊຸມ ສພຊ ໃນໄລຍະຜ່ານມາ ໄດ້ຮັບການຍົກລະດັບທາງດ້ານເນື້ອໃນ ແລະ ມີຄວາມຮອບດ້ານ ຜ່ານການສະໜັບສະໜູນຂອງໂຄງການໃນຫຼາຍກິດຈະກຳ.

ທ່ານ ສັນຍາ ປຣະເສີດ ກ່າວວ່າ: ຈຸດປະສົງຂອງໂຄງການນີ້ ແມ່ນເພື່ອຊ່ວຍສ້າງຄວາມເຂັ້ມແຂງໃນການປະຕິບັດໜ້າທີ່ທາງດ້ານນິຕິບັນຍັດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນການຄົ້ນຄວ້າ ແລະ ພິຈາລະນານະໂຍບາຍ, ກົດໝາຍໃຫ້ມີປະສິດທິຜົນ; ຜົນສຳເລັດເຫຼົ່ານີ້ ເປັນພື້ນຖານໃນການຂະຫຍາຍຜົນ ແລະ ສືບຕໍ່ການພັດທະນາຢ່າງຍືນຍົງ. ທ່ານໄດ້ສະແດງຄວາມຊົມເຊີຍ ແລະ ຂອບໃຈຕໍ່ທຸກພາກສ່ວນ ທີ່ໄດ້ໃຫ້ການຮ່ວມມື ແລະ ສະໜັບສະໜູນໂຄງການນີ້ເປັນຢ່າງດີ ຈົນສາມາດສຳເລັດໂຄງການໄດ້ຢ່າງຈົບງາມ.

**(ນາງ ອາລິນ ສຸພົມມະປະດິດ)**

# ມະຕິ 4 ສະບັບ ຖືກຮັບຮອງເອົາຢູ່ກອງປະຊຸມ ສພຂ ໄຊຍະບູລີ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ໄດ້ດຳເນີນໃນວັນທີ 22-23 ກໍລະກົດນີ້ ທີ່ສະໂມສອນໃຫຍ່ຂອງແຂວງ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7, ທ່ານ ພົງສະຫວັນ ສິດທະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໄຊຍະບູລີ, ທ່ານ ປອ. ລີເບີ ລີບົ່ວປາວ ກຳມະການສູນກາງພັກ, ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 7, ບັນດາທ່ານຄະນະປະຈຳ ແລະ ກຳມະການພັກແຂວງ, ອະດີດການນຳຂອງແຂວງ, ນັກປະຕິວັດອາວຸໂສ-ບຳນານ, ຕາງໜ້າອົງການ ຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງພ້ອມດ້ວຍນາຍບ້ານເທດສະບານ, ນັກທຸລະກິດ ແລະ ຜູ້ປະກອບການ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ໂດຍອອກເປັນມະຕິ 4 ສະບັບ ດັ່ງນີ້:

1. ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ. ສະເໜີໃຫ້ອົງການປົກຄອງແຂວງ ສືບຕໍ່ເອົາໃຈໃສ່ຄື: ຮັບປະກັນໃຫ້ແຂວງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວ 5% ຂຶ້ນໄປ, ລາຍໄດ້ສະເລ່ຍຕໍ່ຫົວຄົນ ບັນລຸ 59 ລ້ານກີບ; ປະຕິບັດມະຕິ 04 ຂອງກົມການເມືອງສູນກາງພັກ, ມະຕິສະພາແຫ່ງຊາດ-ສະພາປະຊາຊົນແຂວງ, ຄຳສັ່ງ 01 ຂອງຄະນະປະຈຳພັກແຂວງວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ຕິດພັນກັບ 2 ວາລະແຫ່ງຊາດ ແລະ ບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ-ການເງິນ; ຊຸກຍູ້ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ໄປຄຽງຄູ່ກັບການປັບປຸງພື້ນຖານໂຄງລ່າງເສັ້ນທາງຫຼວງແຫ່ງຊາດ, ຕ້ານເຈື່ອນ; ສຸມໃສ່ການປະຕິບັດບັນດາຄາດໝາຍທາງດ້ານວັດທະນະທຳ-ສັງຄົມ ໃຫ້ບັນລຸຕາມມະຕິສະບັບເລກທີ 158, 159 ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ8ຂອງສພຂ.

2. ບົດລາຍງານການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ທົ່ວແຂວງ ໄລຍະ 5 ປີ (2021-2025) ແລະ ທິດທາງແຜນການ5ປີ(2026-2030).

3. ການປະເມີນນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ 3 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊ້າງບ້ານ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ.

4. ການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 11 ເມືອງຂອງແຂວງໄຊຍະບູລີ.

ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງເພີ່ມຕື່ມຈາກທ່ານເຈົ້າແຂວງ ແລະ ບັນດາພະແນກການ, ກົມກອງ, ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ເຊິ່ງໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາສຳຄັນທີ່ສັງຄົມສົນໃຈ ແລະ ໄດ້ຕີລາຄາຢ່າງພາວະວິໄສ, ຖືກຕ້ອງ, ສອດຄ່ອງກັບສະພາບຄວາມຈິງຂອງແຂວງ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮຽບຮຽງກົດໝາຍຢາ ແລະ ຜະລິດຕະພັນການແພດ




(ສພຊ) - ກອງປະຊຸມຮຽບຮຽງກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນວັນທີ 23-24 ກໍລະກົດນີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ); ເຂົ້າຮ່ວມມີບັນດາທ່ານປະທານແລະຮອງປະທານກຳມາທິການທີ່ກ່ຽວຂ້ອງພາຍໃນ ສພຊ, ຮອງລັດຖະມົນຕີກະຊວງສາທາລະນະສຸກ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍຄະນະກົມ, ພະແນກ ແລະ ພະນັກງານທີ່ກ່ຽວຂ້ອງ.

ທ່ານຄຳໃບດຳລັດກ່າວວ່າ: ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດໄດ້ຜ່ານການພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ9 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 20 ມິຖຸນາ 2025 ມີສະມາຊິກສະພາແຫ່ງຊາດ (ສສຊ) ຈຳນວນ 19 ທ່ານປະກອບຄຳເຫັນໃສ່ 43 ມາດຕາ ກວມເອົາ 83 ເນື້ອໃນເຊິ່ງບັນດາຄຳຄິດຄຳເຫັນເຫຼົ່ານັ້ນຄະນະຮັບຜິດຊອບກໍໄດ້ຄົ້ນຄວ້າພິຈາລະນາປັບປຸງເນື້ອໃນເບື້ອງຕົ້ນ ແລະ ທ່ານຮອງລັດຖະມົນຕີກະຊວງສາທາລະນະສຸກ ກໍໄດ້ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ໃນວັນທີ 25 ມິຖຸນາ 2025 ໂດຍ ສສຊ ໄດ້ຮັບຮອງເອົາດ້ວຍຄະແນນສຽງເຫັນດີຫຼາຍກວ່າ97% ຂອງຈຳນວນທີ່ເຂົ້າຮ່ວມ; ເຖິງຢ່າງໃດກໍຕາມ, ກົດໝາຍສະບັບນີ້ ມີບັນດາທ່ານ ສສຊ ປະກອບຄຳເຫັນຢ່າງຫຼາກຫຼາຍ ແລະ ກົງໄປກົງມາ. ສະນັ້ນ, ກອງປະຊຸມຮຽບຮຽງຄັ້ງນີ້ຈະໄດ້ສຸມໃສ່ຄົ້ນຄວ້າຢ່າງລະອຽດ ແລະເລິກເຊິ່ງ ເພື່ອເລືອກເຟັ້ນເອົາຄຳເຫັນຂອງຜູ້ແທນມາປັບປຸງໃສ່ເນື້ອໃນກົດໝາຍແລະເນື່ອງຈາກເປັນການຮຽບຮຽງຄັ້ງສຸດທ້າຍນອກຈາກຄຳເຫັນຂອງຜູ້ແທນແລ້ວ ຖ້າເຫັນວ່າຍັງມີຈຸດໃດ, ຄຳສັບໃດທີ່ບໍ່ທັນຈະແຈ້ງ ແລະສອດຄ່ອງກໍສາມາດຍົກຂຶ້ນສົນທະນາກັນຕື່ມ ເພື່ອເຮັດໃຫ້ຮ່າງກົດໝາຍສະບັບນີ້ ມີເນື້ອໃນຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສົມບູນ ກ່ອນນຳສະເໜີປະທານສະພາແຫ່ງຊາດລົງລາຍເຊັນ.

**(ສອນສັກ ວັນວິໄຊ)**

# ກິດຈະກຳແຂ່ງຂັນບານເຕະມິດຕະພາບ



(ສພຊ) - ຕອນແລງວັນສຸກທີ 25 ກໍລະກົດຜ່ານມາ ທີ່ເດີ່ນບານເຕະເຟີຣາຣີ, ນະຄອນຫຼວງວຽງຈັນ ໄດ້ມີກິດຈະກຳແຂ່ງຂັນກິລາບານເຕະມິດຕະພາບລະຫວ່າງ ທະນາຄານພົງສະຫວັນກັບສະພາແຫ່ງຊາດ; ໂດຍມີທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານ ສີວິໄລ ພົມມະຈັກ ຜູ້ອຳນວຍການໃຫຍ່ທະນາຄານພົງສະຫວັນ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ, ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພະນັກງານ ແລະ ນັກກິລາຂອງ 2 ພາກສ່ວນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທັງນີ້, ກໍເພື່ອສ້າງຂະບວນການຊົມເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວຄົບຮອບ70 ປີ (20/7/1955-20/7/2025) ທັງເປັນການສ້າງກິດຈະກຳພົບປະແລກປ່ຽນ, ຮັດແໜ້ນມິດຕະພາບ ແລະ ຄວາມສາມັກຄີ ລະຫວ່າງ ທະນາຄານພົງສະຫວັນກັບ ສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ຄະນະມິດຕະພາບລັດຖະສະພາ ລາວ-ເບລາຣຸດຊີ-ລາວ ພົບປະທາງໄກ




(ສພຊ) - ວັນທີ 23 ກໍລະກົດຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ເບລາຣຸດຊີ ໄດ້ພົບປະກັບທ່ານ ເຊີຟຊ໋ອຟ ເດີມິດທີ ຮອງປະທານຄະນະກຳມະການສາທາລະນະສຸກ, ວັດທະນະທຳ, ຄອບຄົວ ແລະ ຊາວໜຸ່ມ, ປະທານຄະນະມິດຕະພາບລັດຖະສະພາ ເບລາຣຸດຊີ-ລາວ ສະພາຜູ້ແທນປະຊາຊົນຂອງສະພາແຫ່ງຊາດ ແຫ່ງ ສ.ເບລາຣຸດຊີ ຜ່ານລະບົບວີດີໂອແບບທາງໄກ ເຊິ່ງເປັນຄັ້ງທຳອິດທີ່ສອງປະທານຄະນະມິດຕະພາບລັດຖະສະພາ ລາວ-ເບລາຣຸດຊີ-ລາວ ໄດ້ພົບປະກັນນັບແຕ່ໄດ້ຮັບການສ້າງຕັ້ງ; ຈຸດປະສົງການພົບປະຄັ້ງນີ້ ກໍເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນບົດບັນທຶກການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດເບລາຣຸດຊີ ທີ່ໄດ້ລົງນາມໃນເດືອນຕຸລາ 2024 ທີ່ຜ່ານມາພ້ອມທັງເປັນໂອກາດດີໃຫ້ແກ່ສອງຝ່າຍໄດ້ມີການປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນນຳກັນໃນຂົງເຂດວຽກງານທີ່ຕິດພັນກັບດ້ານນິຕິກຳ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ ຂອງສອງປະເທດ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ.

ໂອກາດນີ້, ທ່ານສັນຍາ ປຣະເສີດ ຝາກຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄປຍັງທ່ານອີກໍເຊີເກເຢັນໂກປະທານສະພາຜູ້ແທນປະຊາຊົນເບລາຣຸດຊີ; ພ້ອມນັ້ນ, ຍັງໄດ້ແຈ້ງສະພາບການພາຍໃນ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດກໍຄືສອງອົງການນິຕິບັນຍັດທີ່ໄດ້ຮັບການຂະຫຍາຍຕົວເປັນກ້າວໆແລະຕໍ່ເນື່ອງ, ມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນນຳກັນເປັນປົກກະຕິ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນ ໃນໂອກາດວັນສຳຄັນຂອງຊາດ ທັງມີການສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສອງຝ່າຍຢືນຢັນຈະຮ່ວມກັນຊຸກຍູ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ ແລະ ສົນທິສັນຍາ ທີ່ໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳ, ເພີ່ມທະວີການໄປມາຫາສູ່ຂອງປະຊາຊົນສອງປະເທດ, ການຄ້າການລົງທຶນ, ການສຶກສາ, ພະລັງງານ-ບໍ່ແຮ່ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ; ພ້ອມກັນນີ້, ກໍໄດ້ສະເໜີທິດທາງແຜນການຮ່ວມມືໃນຕໍ່ໜ້າເປັນຕົ້ນ: ການຜັນຂະຫຍາຍບົດບັນທຶກການຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ແລະ ການພົບປະລະຫວ່າງການນຳຂັ້ນສູງແລະຂັ້ນຕ່າງໆ, ສືບຕໍ່ແລກປ່ຽນບົດຮຽນໃນຂົງເຂດວຽກງານການພົວພັນຮ່ວມມື ແລະ ຫົວຂໍ້ທີ່ສອງຝ່າຍມີຄວາມສົນໃຈ ໂດຍຜ່ານຮູບແບບການຈັດສຳມະນາຮ່ວມກັນຕະຫຼອດເຖິງການສືບຕໍ່ຮ່ວມມືສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນການເຄື່ອນໄຫວວຽກງານຢູ່ເວທີລັດຖະສະພາພາກພື້ນ ແລະສາກົນເປັນຕົ້ນແມ່ນIPU,AIPA, ASEP ແລະ ອື່ນໆ.

ໃນຕອນທ້າຍ, ປະທານຄະນະມິດຕະພາບລັດຖະສະພາຂອງສອງປະເທດກໍໄດ້ເຊື້ອເຊີນກັນແລະກັນໄປຢ້ຽມຢາມ ແລະ ພົບປະກັນ ໃນວລາອັນຄວນ.

# ກຜງສ ເຄື່ອນໄຫວເຮັດວຽກຢູ່ ສພຂ ອຸດົມໄຊ ແລະ ຜົ້ງສາລີ



(ສພຂ) - ວັນທີ 24 ກໍລະກົດຜ່ານມາ, ທ່ານ ທັນຕາ ກອງຜາລີຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໂດຍການເຂົ້າຮ່ວມຂອງທ່ານ ອ່ອນແກ້ວ ອຸ່ນອາລົມ ຮອງເຈົ້າແຂວງ, ທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການທີ່ກ່ຽວຂ້ອງຂອງແຂວງ ແລະ ຂະແໜງທີ່ກ່ຽວຂ້ອງພາຍໃນ ສພຂ; ຈຸດປະສົງກໍເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂົງແຜນການ, ການເງິນແລະການກວດສອບ.

ບັນດາພະແນກການ, ອົງການ ໄດ້ລາຍງານຕາມຄຳຖາມເຈາະຈີ້ມເປັນຕົ້ນ: ການກະກຽມແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X (2026-2030) ລວມທັງການຈັດສັນໂຄງການລົງທຶນຂອງລັດ ປີ 2026; ທິດທາງແຜນການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນທ້າຍປີ 2025 ຂອງແຂວງ ຕາມມະຕິທີ່ສະພາປະຊາຊົນແຂວງຮັບຮອງ; ກົນໄກ, ວິທີການແກ້ໄຂການປະຕິບັດຄາດໝາຍຂອງຂະແໜງການທີ່ມີຄວາມສ່ຽງຈະບໍ່ບັນລຸ; ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໂດຍສະເພາະການແກ້ໄຂໜີ້ສິນທີ່ຍັງຄ້າງມາດົນ; ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໂດຍສະເພາະການເກັບລາຍຮັບຈາກການຂຸດຄົ້ນບໍ່ແຮ່ເພື່ອສົ່ງອອກ, ການຈັດເກັບລາຍຮັບດ້ວຍເຄື່ອງມືທີ່ທັນສະໄໝແລະການນຳໃຊ້ເງິນເກີນແຜນ; ສະພາບການຂຸດຄົ້ນແຮ່ທາດຢູ່ແຂວງອຸດົມໄຊ ໃນ 6 ເດືອນຕົ້ນປີ 2025; ຄວາມຄືບໜ້າ, ຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານກວດສອບ-ກວດກາ, ການແກ້ໄຂຜົນການກວດສອບຂອງບັນດາຂະແໜງການ. ຫຼັງຈາກນັ້ນ, ໄດ້ມີການແລກປ່ຽນຄຳຄິດເຫັນເຊິ່ງກັນແລະກັນຢ່າງກົງໄປກົງມາ.

ທ່ານຮອງປະທານກຜງສ ແລະ ຄະນະ ຍັງໄດ້ລົງເຄື່ອນໄຫວວຽກງານຢູ່ເມືອງນາໝໍ້ອີກດ້ວຍ.

ວັນທີ21-22 ກໍລະກົດ, ທ່ານ ທັນຕາ ກອງຜາລີ ພ້ອມດ້ວຍຄະນະໂດຍສົມທົບກັບຄະນະທີມງານຂອງ ສພຂ ຜົ້ງສາລີ ນຳໂດຍທ່ານ ສົມຈິດ ທັບລາກອນ ຄະນະປະຈຳພັກແຂວງ,

ອ່ານຕໍ່ໜ້າ 12

# ກອງປະຊຸມທາບທາມຮອບເປີດກວ້າງ ຮອບທີ 1




(ສພຊ) - ວັນທີ 24 ກໍລະກົດຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມທາບທາມຮອບເປີດກວ້າງ (ຮອບທີ 1) ເນື້ອໃນເອກະສານກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ແລະ ບຸກຄະລາກອນອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ (ສສຍລ) ສະໄໝທີ IX ໂດຍການເປັນປະທານຂອງສະຫາຍ ນາງ ວິໄຊ ສະຣິດທິລາດ ປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ມີສະຫາຍ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ຄະນະພັກສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍບັນດາສະຫາຍສະມາຊິກແມ່ຍິງພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ນາງ ວິໄຊ ສະຣິດທິລາດ ມີຄຳເຫັນວ່າ: ຜົນຂອງກອງປະຊຸມຄັ້ງນີ້ ຈະກາຍເປັນບ່ອນອີງທີ່ສຳຄັນເພື່ອໃຫ້ຄະນະຮັບຜິດຊອບຊີ້ນຳການກະກຽມດຳເນີນກອງປະຊຸມໃຫຍ່ນຳໄປຄົ້ນຄວ້າ, ພິຈາລະນາ ແລະ ປັບປຸງໃຫ້ຖືກຕ້ອງ, ສົມບູນ, ສອດຄ່ອງກັບສະພາບຄວາມຮຽກຮ້ອງຕ້ອງການ ກໍຄືຄວາມມຸ່ງມາດປາຖະໜາຕົວຈິງຂອງແມ່ຍິງລາວບັນດາເຜົ່າ ໃນໄລຍະ5ປີຕໍ່ໜ້າ; ເພື່ອເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ, ຈຶ່ງຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ສຸມສະຕິປັນຍາ ແລະຫົວຄິດປະດິດສ້າງຂອງຕົນເຂົ້າໃນການຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາ(ຮ່າງ)ເອກະສານຂອງກອງປະຊຸມໃຫຍ່ຢ່າງກົງໄປກົງມາ, ສ້າງສັນ ແລະ ໃຊ້ສິດປະຊາທິປະໄຕຂອງຕົນຄົ້ນຄວ້າເອົາບຸກຄະລາກອນທີ່ມີເງື່ອນໄຂມາດຕະຖານ ເຂົ້າສະໝັກຮັບເລືອກຕັ້ງເປັນຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ເຊິ່ງຜົນການທາບທາມຄັ້ງນີ້ ຈະໄດ້ນຳໄປສັງລວມກັບຜົນການທາບທາມໃນຂອບເຂດທົ່ວປະເທດ ກ່ອນຈະນຳໄປສູ່ການທາບທາມຮອບທີ 2 ຕໍ່ໄປ.

ທີ່ປະຊຸມຍັງໄດ້ຜ່ານມາດຕະຖານ, ເງື່ອນໄຂ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ສະໄໝທີ IX, ຮັບຟັງການມີຄຳເຫັນໂອ້ລົມຕໍ່ກອງປະຊຸມຂອງສະຫາຍບຸນຕາເທບພະວົງ ແລະ ດຳເນີນການປ່ອນບັດທາບທາມ.

ກອງປະຊຸມໃຫຍ່ສະຫະພັນແມ່ຍິງ ນັບແຕ່ຂັ້ນຮາກຖານຮອດຂັ້ນກະຊວງ-ອົງການ, ແຂວງ, ນະຄອນຫຼວງ ແມ່ນໄດ້ສຳເລັດໃນຂອບເຂດທົ່ວປະເທດ;ສະນັ້ນ, ເພື່ອກະກຽມເຂົ້າສູ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ IX ໃຫ້ສອດຄ່ອງກັບຄຳສັ່ງ ແລະ ບົດແນະນຳຂອງຄະນະຈັດຕັ້ງສູນກາງພັກ ແລະ ຄຳແນະນຳຂອງສູນກາງສະຫະພັນແມ່ຍິງລາວ, ການທາບທາມເນື້ອໃນເອກະສານກອງປະຊຸມໃຫຍ່ແລະທາບທາມບຸກຄະລາກອນ ຈະໄດ້ດຳເນີນທັງໝົດ 3 ຮອບ, ໃນນັ້ນການທາບທາມຮອບທີ 1 (ຮອບເປີດກວ້າງ), ສສຍລ ໄດ້ມອບຄວາມຮັບຜິດຊອບໃຫ້ແກ່ສະຫະພັນແມ່ຍິງກະຊວງ-ອົງການ, ແຂວງ, ນະຄອນຫຼວງເປັນຜູ້ຈັດຕັ້ງແລະດຳເນີນການທາບທາມພາຍໃຕ້ການຊີ້ນຳໂດຍກົງຈາກຄະນະພັກ-ຄະນະນຳຂອງແຕ່ລະພາກສ່ວນ.

**(ສອນສັກ ວັນວິໄຊ)**

# ສສຊ,ສສຂ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງງາ




(ສພຂ) - ວັນທີ 18-21 ກໍລະກົດຜ່ານມາ, ທ່ານ ຄຳຈັນ ໂສຕາປະເສີດຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4, ທ່ານ ທອງຄານ ວັດສະດາກອນ ແລະ ທ່ານ ບຸນທີ ໄຊຍະວົງສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງງາ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີ ສິດເລືອກຕັ້ງ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ຢູ່ເມືອງງາ ໂດຍມີບັນດາທ່ານການນຳ ແລະ ພະນັກງານຫຼັກແຫຼ່ງຂອງເມືອງພ້ອມດ້ວຍອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງ; ພ້ອມດຽວກັນນັ້ນ, ຍັງໄດ້ຮັບຟັງຄຳເຫັນ, ຄຳສະເໜີຂອງຜູ້ເຂົ້າຮ່ວມແລະການຊີ້ແຈງຈາກ ສສຊ, ສສຂ.



## ເຊື່ອມຊຶມ...

(ຕໍ່ຈາກໜ້າ 1)

ພັກພ້ອມດ້ວຍສະມາຊິກພັກທົ່ວ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກສະພາແຫ່ງຊາດ ໄດ້ເຜີຍແຜ່ເນື້ອໃນຂອງມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ສະໄໝທີ XI ໂດຍຫຍໍ້ ເຊິ່ງສະຫາຍໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບຜົນສຳເລັດຂອງການດຳເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ໂດຍເນັ້ນໜັກເນື້ອໃນສຳຄັນທີ່ກອງປະຊຸມໄດ້ຮັບຮອງເອົາ ເປັນຕົ້ນ: ການຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາຂອງລັດ ໃນ 6 ເດືອນຕົ້ນປີ ແລະ ວາງແຜນການ 6 ເດືອນທ້າຍປີ 2025 ໂດຍມີ 12 ວຽກຈຸດສຸມ; ການຄົ້ນຄວ້າ ແລະ ປັບປຸງເອກະສານທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ຄັ້ງທີ XII ຈຳນວນ 5 ສະບັບ; ຜົນການດຳເນີນກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ, ຮາກຖານພັກອ້ອມຂ້າງກະຊວງ-ອົງການ, ນະຄອນຫຼວງ ແລະ ແຂວງ, ຄາດຄະເນແຜນການດຳເນີນກອງປະຊຸມໃຫຍ່ຂອງກະຊວງ-ອົງການ, ນະຄອນຫຼວງ ແລະ ແຂວງ; ການວາງຈຸດສຸມແຕ່ນີ້ຮອດກອງປະຊຸມຄົບຄະນະ ຄັ້ງທີ 11 ຂອງສູນກາງພັກ ໂດຍປະກອບມີ 7 ໜ້າວຽກຈຸດສຸມ ເພື່ອກ້າວໄປສູ່ການດຳເນີນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໃນຕົ້ນປີ 2026.

ກອງປະຊຸມຍັງໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານຂັ້ນຫົວໜ້າ ແລະ ຮອງຫົວໜ້າກົມ ຈຳນວນ 3 ສະຫາຍ ຍິງ 1 ສະຫາຍ, ຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ຈຳນວນ 3 ສະຫາຍ ຍິງ 1 ສະຫາຍ.

ໂອກາດນີ້, ສະຫາຍປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີບາງຄຳເຫັນໂອ້ລົມໂດຍໄດ້ເນັ້ນໜັກບາງບັນຫາຄື:

1. ໃນເງື່ອນໄຂທີ່ສະພາບການພາກພື້ນ ແລະ ສາກົນ ມີຄວາມສັບສົນ, ຜັນແປຢ່າງວ່ອງໄວ, ມີຄວາມຈຳເປັນຕ້ອງໄດ້ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນທີ່ຢູ່ໃນກົງຈັກການຈັດຕັ້ງຂອງຕົນ ມີຄວາມອົດທົນ, ມີຫຼັກໝັ້ນການເມືອງໜັກແໜ້ນ, ຕັ້ງໜ້າປະຕິບັດໜ້າທີ່ວຽກງານ, ພ້ອມກັນສູ້ຊົນຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກ, ເອົາໃຈໃສ່ແກ້ໄຂໃຫ້ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ.

2. ໃນໄລຍະທີ່ສະພາແຫ່ງຊາດພວມມີການປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ, ໂລ່ງລ່ຽນ ແລະ ມີປະສິດທິພາບ ເພື່ອຮອງຮັບແກ່ການເຄື່ອນໄຫວຂອງ ສພຊ ຊຸດທີ X ນັ້ນ, ພະນັກງານທຸກຄົນຕ້ອງເອົາໃຈໃສ່ປະຕິບັດກົດໝາຍ, ກົດລະບຽບຂອງລັດຖະກອນຢ່າງເຂັ້ມງວດ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ຮີບຮ້ອນແກ້ໄຂປາກົດການຫຍໍ້ທໍ້ຕ່າງໆຢ່າງທັນການ.

3. ເອົາໃຈໃສ່ເຊື່ອມຊຶມກຳແໜ້ນເນື້ອໃນຂອງມະຕິຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ ໂດຍນຳເອົາເນື້ອໃນຈິດໃຈດັ່ງກ່າວ ສືບຕໍ່ຄົ້ນຄວ້າ, ວິເຄາະວິໄຈ, ໄຈ້ແຍກຢ່າງເລິກເຊິ່ງ ເພື່ອຈັດຕັ້ງຜັນຂະຫຍາຍເຂົ້າໃນການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະດ້ານ.

4. ທຸກພາກສ່ວນຈົ່ງສຸມເຫື່ອແຮງເຂົ້າໃສ່ການກະກຽມໃຫ້ແກ່ການເລືອກຕັ້ງສະພາແຫ່ງຊາດ ຊຸດທີ X; ການແຕ່ງຕັ້ງຄະນະກຳມະການລະດັບຊາດ, ບັນດາອະນຸກຳມະການ, ໜ່ວຍງານຊ່ວຍວຽກ ໃຫ້ສຳເລັດໃນເດືອນສິງຫານີ້ ທັງຈະຕ້ອງໄດ້ມີການຄັດເລືອກເປົ້າໝາຍຜູ້ສະໝັກ, ຈັດເຝິກອົບຮົມຜູ້ສະໝັກຮັບເລືອກຕັ້ງກ່ອນການເລືອກຕັ້ງດັ່ງເຄີຍປະຕິບັດໃນຊຸດຜ່ານມາ.

5. ການກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກສະພາແຫ່ງຊາດໃນປີ 2026 ໜ້ານີ້, ຄະນະບໍລິຫານງານພັກ ໄດ້ສຳເລັດການສ້າງແຜນການ, ການແຕ່ງຕັ້ງຄະນະຮັບຜິດຊອບແຕ່ລະຂົງເຂດວຽກງານ ຈຶ່ງສະເໜີໃຫ້ແຕ່ລະພາກສ່ວນເລີ່ມເຮັດວຽກງານຂອງຕົນແຕ່ຫົວທີ ໂດຍສະເພາະການກະກຽມດ້ານເນື້ອໃນ ໃຫ້ເອົາໃຈໃສ່ເກັບກຳຂໍ້ມູນລະອຽດ, ບັນດາໜ່ວຍພັກຮາກຖານ, ຄະນະພັກຮາກຖານ ກໍໃຫ້ເອົາໃຈໃສ່ນຳພາການສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳຂອງຕົນ ເພື່ອສະໜອງຂໍ້ມູນໃຫ້ຄະນະຮັບຜິດຊອບເນື້ອໃນລວມ ເພື່ອເຮັດໃຫ້ຮ່າງ ລາຍງານການເມືອງ, ບົດສະຫຼຸບການນຳພາລວມຂອງຄະນະພັກ ມີຄວາມສອດຄ່ອງກັບຕົວຈິງ.

6. ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ປະກາດການແຕ່ງຕັ້ງຕຳແໜ່ງບໍລິຫານຈຳນວນໜຶ່ງ ຫວັງວ່າບັນດາສະຫາຍທີ່ໄດ້ຮັບການແຕ່ງຕັ້ງ ຈະເອົາໃຈໃສ່ປະຕິບັດໜ້າທີ່ວຽກງານທີ່ພັກ-ລັດມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ,ເຮັດໃຫ້ວຽກງານມີຜົນສຳເລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ, ເປັນແບບຢ່າງເປັນກຳລັງແຮງໃຫ້ແກ່ກົງຈັກຂອງຕົນໃນການປະຕິບັດວຽກງານທີ່ຖືກມອບໝາຍໃຫ້.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**



## ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ສພຂ ຜົ້ງສາລີ



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ຊຸດທີ II ໄດ້ດຳ ເນີນເປັນເວລາ 1 ວັນເຄິ່ງ ນັບແຕ່ວັນທີ 17-18 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານ ຄຳຜອຍ ວັນນະສານ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຜົ້ງສາລີ, ບັນດາທ່ານຮອງເຈົ້າແຂວງ, ຄະນະປະຈຳ ແລະ ກຳມະການພັກແຂວງ, ສະມາຊິກ ສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2, ສະມາຊິກສະພາປະຊາຊົນແຂວງ, ສະມາຊິກອົງການປົກຄອງແຂວງ, ອົງການ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງພັກ-ລັດ, ອົງການລັດທຽບເທົ່າຂັ້ນແຂວງ ແລະ ວິສາຫະກິດທັງພາກລັດ-ເອກະຊົນພາຍໃນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາເປັນມະຕິ 3 ສະບັບ ຄື: 1. ການສ້າງຕັ້ງຕາແສງພາຍໃນແຂວງ; 2. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; 3. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ແຜນການເຄື່ອນໄຫວວຽກງານຮອດກອງປະຊຸມ ສະໄໝສາມັນເທື່ອທີ 10 ຂອງ ສພຂ.

**(ຂ່າວ: ພຸດສະດີ ແສງຈອມຄູນ, ພາບ: ບົວແສງ ສຸລິວົງ)**

## ກະກຽມຄວາມພ້ອມນິຕິກຳທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 9




(ສພຂ) - ເພື່ອຮັບປະກັນໃຫ້ວຽກງານການສ້າງ, ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມບາດກ້າວຂັ້ນຕອນ ແລະ ສະຫຼຸບຕີລາຄາຄືນການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງໃນໄລຍະຜ່ານ ໃນຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ກະກຽມຄວາມພ້ອມນຳເຂົ້າລາຍງານ, ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີII; ວັນທີ3 ກໍລະກົດຜ່ານມາ ທີ່ ສພຂ ສາລະວັນ ໄດ້ມີກອງປະຊຸມປຶກສາຫາລືວຽກງານການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ 3 ສະ ບັບ ແລະ ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ 4 ສະບັບ ໂດຍການເປັນປະທານຂອງທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີຮັກສາການປະທານ ແລະ ຮອງປະທານຄະນະກຳມະການຍຸຕິທຳ ແລະປກຊ-ປກສ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ບັນດາທ່ານຕາງໜ້າຈາກຄະນະຮັບຜິດຊອບສ້າງແລະປັບປຸງນິຕິກຳໃຕ້ກົດໝາຍຂັ້ນແຂວງ, ພະແນກການທີ່ຮັບຜິດຊອບສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ.

ນິຕິກຳໃຕ້ກົດໝາຍທີ່ຈະນຳເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 9 ມີ 3 ສະບັບສ້າງໃໝ່ຄື: 1.ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເກັບລາຍຮັບຈາກຊັບພະຍາກອນທຳມະຊາດແລະເຄື່ອງປ່າຂອງດົງ, 2. ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດຂະໜາດນ້ອຍ, 3. ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງອູ່ສ້ອມແປງພາຫະນະ ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງທີ່ຖືກປະເມີນຜົນ ມີ 4 ສະບັບຄື: 1. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ, ປົກປັກຮັກສາແລະຟື້ນຟູປ່າໄມ້; 2. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຮງງານພາຍໃນແລະຕ່າງປະເທດ; 3. ຂໍ້ຕົກລົງວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃນກິດຈະກຳສຳປະທານ; 4. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄຸນນະພາບນ້ຳດື່ມແລະນ້ຳກ້ອນ ທີ່ຜະລິດຈາກໂຮງງານພາຍໃນແຂວງ.

ກອງປະຊຸມໄດ້ຮັບຟັງການລາຍງານຄວາມຄືບໜ້າຂອງການກະກຽມຄວາມພ້ອມ ແລະ ປະກອບຄຳເຫັນ, ຄົ້ນຄວ້າ, ປຶກສາຫາລື, ຊີ້ແຈງ ຕໍ່ເນື້ອໃນບາງໝວດບາງມາດຕາ ຢ່າງເປັນເຈົ້າການຕາມໜ້າທີ່ຮັບຜິດຊອບ ຕໍ່ກັບຈຸດທີ່ພາໃຫ້ນິຕິກຳໃຕ້ກົດໝາຍ ຍັງບໍ່ທັນຜັນຂະຫຍາຍເຊື່ອມຊຶມໄດ້ຢ່າງກວ້າງຂວາງ ແລະ ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດຂອງພະແນກການຂັ້ນແຂວງ, ຂັ້ນເມືອງ ແລະ ບັນຫາຕ່າງໆທີ່ພົບ ລ້ວນແຕ່ເປັນຂໍ້ເປັນມູນໃຫ້ພະແນກການທີ່ຮັບຜິດຊອບສ້າງນິຕິກຳໃຕ້ກົດໝາຍ ນຳໄປຄົ້ນຄວ້າ ແລະ ປັບປຸງເນື້ອໃນບາງມາດຕາຂອງນິຕິກຳໃຕ້ກົດໝາຍ ທີ່ອາດຍັງບໍ່ທັນສອດຄ່ອງກັບສະພາບຕົວຈິງຂອງສັງຄົມໃນປັດຈຸບັນ, ແນໃສ່ຮັບປະກັນໃຫ້ນິຕິກຳໃຕ້ກົດໝາຍ ມີເນື້ອໃນຖືກຕ້ອງຕາມແນວທາງ, ແຜນນະໂຍບາຍຂອງພັກ ແລະ ຕາມລັດຖະທຳມະນູນ, ກົດໝາຍ ໃຫ້ມີຄວາມສອດຄ່ອງກົມກຽວ, ໜັກແໜ້ນ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**(ດີລຳພົນ ພົມມະຈັນ)**

## ປະກາດຄະນະໜ່ວຍພັກ ສພຂ ຫຼວງນ້ຳທາ ຊຸດໃໝ່ ແລະ ຄັດເລືອກຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກແຂວງ



(ສພຂ) - ວັນທີ 9 ກໍລະກົດຜ່ານມາ, ໜ່ວຍພັກສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດພິທີປະກາດຄະນະໜ່ວຍພັກຊຸດໃໝ່ ແລະ ເລື່ອນສະມາຊິກພັກສຳຮອງຂຶ້ນສົມບູນ ພາຍໃຕ້ການເປັນປະທານຂອງສະຫາຍຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ຄປຈສພຂ) ໂດຍມີສະມາຊິກພັກພາຍໃນໜ່ວຍ ເຂົ້າຮ່ວມ ຢ່າງພ້ອມພຽງ. ໃນພິທີໄດ້ຜ່ານມະຕິຂອງຄະນະປະຈຳພັກແຂວງ ສະບັບເລກທີ 124/ຄປພຂ, ລົງວັນທີ 2 ມິຖຸນາ 2024 ວ່າດ້ວຍການບົງຕົວແຕ່ງຕັ້ງຄະນະໜ່ວຍພັກສະພາປະຊາຊົນແຂວງ ໂດຍແຕ່ງຕັ້ງສະຫາຍ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານ ຄປຈ ສພຂ ເປັນເລຂາ, ສະຫາຍ ມີໄຊ ມີວິໄລ ກຳມະການ ຄປຈສພຂ ເປັນຮອງ ເລຂາ ແລະ ສະຫາຍ ວຽງໄຊ ສັກລຳດວນ ຮອງເລຂາທິການ ສພຂ ເປັນຄະນະ; ພ້ອມດຽວກັນ, ຍັງໄດ້ຜ່ານມະຕິຂອງຄະນະພັກຂັ້ນເທິງ ວ່າດ້ວຍການເລື່ອນສະມາຊິກພັກສຳຮອງຂຶ້ນສົມບູນ ຈຳນວນ 4 ສະຫາຍ (ຍິງ).

ສະຫາຍ ຄຳຟອງ ອິນມານີ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີ ໂດຍເນັ້ນໜັກໃຫ້ຄະນະພັກຊຸດໃໝ່ ເອົາໃຈໃສ່ຊີ້ນຳ-ນຳພາວຽກງານສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີຜົນສຳເລັດກວ່າເກົ່າ; ໃນການເລື່ອນສະມາຊິກພັກສຳຮອງຂຶ້ນສົມບູນເປັນການຂະຫຍາຍພັກຢ່າງແຂງແຮງ ພ້ອມທັງຮຽກຮ້ອງໃຫ້ສະມາຊິກພັກສົມບູນໃໝ່ ກໍຄືສະມາຊິກພັກທຸກສະຫາຍ ຈົ່ງເຝິກຝົນຫຼໍ່ຫຼອມຕົນເອງ, ຄົ້ນຄວ້າຮ່ຳຮຽນ, ກຳແໜ້ນແນວທາງແລະກົດລະບຽບຂອງພັກ, ພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານວິຊາສະເພາະໃຫ້ມີຜົນສຳເລັດ.

ຕອນບ່າຍວັນດຽວກັນ, ໜ່ວຍພັກສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມປ່ອນບັດຄັດເລືອກເອົາຜູ້ແທນສົມບູນ ແລະ ສຳຮອງ ເພື່ອກະກຽມເຂົ້າຮ່ວມກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງທີ່ຈະໄຂຂຶ້ນໃນຕໍ່ໜ້າພາຍໃຕ້ ການເປັນປະທານຂອງສະຫາຍ ກົງເພັດ ແກ້ວບົວພາ ໂດຍມີຜູ້ຕາງໜ້າຈາກຄະນະຈັດຕັ້ງແຂວງ, ຄະນະກວດກາພັກ-ລັດແຂວງ, ຄະນະໂຄສະນາອົບຮົມແຂວງ, ບັນດາສະມາຊິກພັກສົມບູນພາຍໃນໜ່ວຍເຂົ້າຮ່ວມ; ໃນການດຳເນີນກອງປະຊຸມ, ໄດ້ຜ່ານມາດຕະຖານເງື່ອນໄຂຜູ້ແທນສົມບູນ ແລະ ສຳຮອງ, ດຳເນີນການປ່ອນບັດ, ກວດນັບຄະແນນຢ່າງ ໂປ່ງໃສ ແລະ ເປັນທຳ ສາມາດເລືອກໄດ້ຜູ້ແທນສົມບູນ 1 ສະຫາຍ ແລະ ສຳຮອງ 1 ສະຫາຍ ຕາມລະດັບຄາດໝາຍ ເຊິ່ງຈະໄດ້ລາຍງານປະຫວັດຂອງຜູ້ແທນສົມບູນ ແລະ ສຳຮອງ ໃຫ້ຂັ້ນເທິງຮັບຊາບທັນຕາມເວລາທີ່ກຳນົດ.

**(ນາງ ວັນນີ ແຝງບົວວັນ ແລະ ອາເມົງ ວີແຄລູ)**





# ສພຂ ສາລະວັນ ຮັບຮອງເອົາມະຕິ 6 ສະບັບ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ II ໄດ້ດຳເນີນໃນວັນທີ 17-18 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານການນຳ ແລະ ອະດີດການນຳຂັ້ນສູງພັກ-ລັດຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ 14, ສະມາຊິກສະພາປະຊາຊົນແຂວງ, ພະແນກການ ແລະ ອົງການລັດທຽບເທົ່າຂັ້ນແຂວງ, ເລຂາພັກເມືອງ ແລະ ແຂກຮັບເຊີນເຂົ້າຮ່ວມ 100 ກວ່າທ່ານ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາມະຕິກອງປະຊຸມ 6 ສະບັບຄື: 1. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ; 2. ບົດລາຍງານກ່ຽວກັບການຈັດຕັ້ງປະຕິ ບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; 3. ຊີ່ເອີ້ນປະທານ, ຮອງປະທານຄະນະກຳມະການປົກຄອງເມືອງ ແລະ ແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 8 ເມືອງຂອງແຂວງ; 4. ນິຕິກຳສ້າງໃໝ່ 3 ສະບັບ: 1) ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດຂະໜາດນ້ອຍຢູ່ແຂວງ, 2) ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງອູ່ສ້ອມແປງພາຫະນະຢູ່ແຂວງ, 3) ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເກັບລາຍຮັບຈາກຊັບພະຍາ ກອນທຳມະຊາດ ແລະ ເຄື່ອງປ່າຂອງດົງຢູ່ແຂວງ.

**(ຂ່າວ: ດີລຳພົນ ພົມມະຈັນ, ພາບ: ນາງ ຈັນທີ)**

# ສພຂ ຈຳປາສັກ ຮັບຮອງມະຕິ 5 ສະບັບ ແລະ ສະເໜີໃຫ້ແກ້ໄຂ 11 ບັນຫາ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ II ໄດ້ ດຳເນີນໃນວັນທີ 15-16 ກໍລະກົດຜ່ານມາ ທີ່ສະໂມສອນກອງບັນຊາການທະຫານແຂວງ, ພາຍໃຕ້ການເປັນປະທານຂອງທ່ານສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໂດຍມີທ່ານ ປອ. ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຈຳປາສັກ, ບັນດາການນຳພັກ-ລັດຂັ້ນຂັ້ນແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ການນຳພະແນກການ-ອົງການລັດທຽບເທົ່າຂັ້ນແຂວງ, ເຈົ້າເມືອງ, ເຈົ້ານະຄອນ ແລະ ຜູ້ຕາງໜ້າຈາກພາກສ່ວນຕ່າງໆ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ 15, ສະມາຊິກສະພາປະຊາຊົນແຂວງ ແລະ ສະຖາບັນການສຶກສາຕ່າງໆພາຍໃນແຂວງ ເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ແລະ ອອກເປັນມະຕິ 5 ສະບັບ ຄື:1) ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ ປະຈຳ 6 ເດືອນທ້າຍປີ 2025, 2) ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ ປະຈຳ 6 ເດືອນທ້າຍປີ 2025, 3) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ, 4) ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດການໂຄສະນາເຜີຍແຜ່ກົດໝາຍ ແລະ ການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ສພຂຮັບຮອງໃນໄລຍະຜ່ານມາ; 5) ການສະເໜີກ່ຽວກັບການປ່ຽນຊື່ອົງການປົກຄອງເມືອງ-ນະຄອນ ເປັນຄະນະກຳມະການປົກຄອງເມືອງ-ນະຄອນ ແລະ ການສະເໜີແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ-ນະຄອນ.

ພ້ອມນີ້, ກອງປະຊຸມໄດ້ສະເໜີໃຫ້ອົງການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດແກ້ໄຂຫຼາຍບັນຫາສຳຄັນ 11 ເນື້ອໃນ ໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ເພື່ອຮັບປະກັນໃຫ້ບັນລຸໄດ້ຕາມແຜນ 6 ເດືອນທ້າຍປີ 2025 ຄື: 1) ສືບຕໍ່ເອົາໃຈໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍສະເພາະສຸມໃສ່ການຜະລິດເພື່ອຮັບປະກັນການສະໜອງ, ຊົມໃຊ້ພາຍໃນ ແລະ ສົ່ງອອກຢ່າງແຂງແຮງ, ເພີ່ມທະວີສົ່ງເສີມການຜະລິດພາຍໃນ ແລະ ມີມາດຕະການເຂັ້ມງວດໃນການຄວບຄຸມການນຳເຂົ້າ; 2) ເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ, ກວດກາ ແລະ ຕິດຕາມລາຄາສິນຄ້າຕາມທ້ອງຕະຫຼາດຢ່າງປົກກະຕິຕໍ່ເນື່ອງ ໂດຍສະເພາະສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດ, ເພື່ອສະກັດກັ້ນການຂຶ້ນລາຄາແບບບໍ່ສົມເຫດສົມຜົນ ແລະ ການກັກຕຸນສິນຄ້າ; 3) ເປັນເຈົ້າການລົງກວດກາປະເມີນຄືນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ມີກົນໄກ, ມາດຕະການເຂັ້ມງວດໃນການແກ້ໄຂບັນຫາມົນລະພິດຕ່າງໆ ທີ່ເກີດຈາກລານມັນຕົ້ນ ແລະ ເກີດຈາກໂຄງການຟາມລ້ຽງສັດຂອງຜູ້ປະກອບການ ເພື່ອຫຼີກລ່ຽງບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;4)ເພີ່ມທະວີການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ປ່າໄມ້ ແລະ ເຂັ້ມງວດໃນການກວດກາ, ຕິດຕາມ, ແລະ ເດັດຂາດໃນການປະຕິບັດມາດຕະການຕາມລະບຽບກົດໝາຍຕໍ່ຜູ້ລະເມີດທີ່ເຂົ້າມາບຸກລຸກ 3 ປະເພດປ່າ; 5) ສືບຕໍ່ປະເມີນຄວາມຄືບໜ້າ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການພັດທະນາເຂດເສດຖະກິດພິເສດຢູ່ແຂວງ ໃຫ້ໄປຕາມສັນຍາ ແລະ ແຜນວຽກທີ່ກຳນົດໄວ້ໃນແຕ່ລະໄລຍະ; 6) ສ້າງກົນໄກທີ່ຊັດເຈນໃນການແກ້ໄຂບັນຫາ, ທົບທວນ ແລະ ປັບປຸງຄືນຂັ້ນຕອນການອອກໃບຕາດິນ ໃຫ້ມີຄວາມວ່ອງໄວເພື່ອແກ້ໄຂການຂຶ້ນທະບຽນອອກໃບຕາດິນໃນທົ່ວແຂວງ ທີ່ຍັງຄົງຄ້າງໃນໄລຍະຜ່ານມາ ໃຫ້ບັນລຸໄດ້ຕາມມະຕິທີ່ ສພຂ ຮັບຮອງ; 7) ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການຢ່າງເດັດຂາດ ໃນການແກ້ໄຂຜົນການກວດກາການເຊົ່າ-ສຳປະທານບັນດາໂຄງການທີ່ໄດ້ຮັບອະນຸຍາດການລົງທຶນຢູ່ເຂດສວນວັດທະ ນະທຳຫຼັກ 7 ແລະ ຄ່າເຊົ່າ-ສຳປະທານດິນລັດ ຕາມຂໍ້ຕົກລົງເລກທີ 431 ຂອງທ່ານເຈົ້າແຂວງ ໂດຍສະເພາະບັນຫາໂຄງການທີ່ບໍ່ມີການພັດທະນາ, ບໍ່ທັນມີສັນຍາເຊົ່າ-ສຳປະທານ ແລະ ປັບປຸງອັດຕາຄ່າເຊົ່າ-ສຳປະທານໃຫ້ສອດຄ່ອງກັບລັດຖະບັນຍັດ ເລກທີ 002 ຂອງປະທານປະເທດ; 8) ເພີ່ມທະວີຄວາມເຂັ້ມງວດໃນການຕິດຕາມແກ້ໄຂບັນຫາສະພາບຂາດຄູສອນ, ການປະລະການຮຽນ, ປັບປຸງຄຸນນະພາບການສຶກສາ ແລະ ການສົ່ງເສີມວິຊາຊີບ ໃຫ້ມີຄຸນນະພາບຕາມມະຕິເລກທີ 09 ຂອງລັດຖະບານ; 9) ເອົາໃຈໃສ່ໃນການສົ່ງເສີມພັດທະນາສີມືແຮງງານດ້ານຕ່າງໆ ໃຫ້ມີຄຸນນະພາບ, ຕອບສະໜອງໄດ້ຕະຫຼາດແຮງງານພາຍໃນ ແລະ ຕິດຕາມ, ຄຸ້ມຄອງແຮງງານທີ່ໄປອອກແຮງງານຢູ່ຕ່າງປະເທດ ໃຫ້ຖືກຕ້ອງສອດຄ່ອງຕາມລະບຽບ, ກົດໝາຍ; 10) ເພີ່ມທະວີຄວາມຮັບຜິດຊອບ ດ້ວຍການຍົກສູງຄວາມເປັນເຈົ້າການຂອງພະນັກງານທີ່ເຮັດໜ້າທີ່ປະຕິບັດຄຳຕັດສິນທີ່ໃຊ້ໄດ້ເຂັດຂາດຂອງສານ ໃຫ້ມີຄວາມຖືກຕ້ອງ, ທັນຕາມກຳນົດເວລາ; 11) ເພີ່ມທະວີການໂຄສະນາກົດໝາຍ ແລະ ຊຸກຍູ້ການຮ່ວມມືຂອງທຸກພາກສ່ວນໃຫ້ຫຼາຍຂຶ້ນ ແລະ ເຂັ້ມງວດການຈັດຕັ້ງປະຕິບັດ 5 ມາດຕະການທີ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງວາງອອກຢ່າງເຂັ້ມງວດ, ເດັດຂາດໃນການແກ້ໄຂບັນຫາຢາເສບຕິດ ຕາມມະຕິເລກທີ 20 ຂອງ ສພຂ.

**(ສົມວິຈິດ ໄຊມົນຕີ ແລະ ສົມພອນ ໄຊປັນຍາ)**

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງ



(ສພຂ) - ວັນທີ 14 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມສະໂມສອນແຂວງສາລະວັນ, ໄດ້ມີກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງກັບອົງການປົກຄອງແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ແລະ ທ່ານ ພູທົງ ຄຳມະນີວົງ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ ແລະ ກຳມະການພັກແຂວງ, ຮອງປະທານ ແລະ ກຳມະການ ຄປຈສພຂ, ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ຫົວໜ້າພະແນກການອ້ອມຂ້າງ-ອົງການລັດທຽບເທົ່າຂັ້ນແຂວງ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານຜົນການພົວພັນປະສານງານລະຫວ່າງສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ໄລຍະ 6 ເດືອນຕົ້ນປີ 2025 ທີ່ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນເຊິ່ງສະແດງເຖິງຄວາມພະຍາຍາມ ແລະ ເອົາໃຈໃສ່ສູງໃນການພົວພັນປະສານງານຮ່ວມກັນຈົນມີຜົນສຳເລັດໃນແຕ່ລະດ້ານ ລວມທັງດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບາງບັນຫາທີ່ເຮັດໃຫ້ການປະຕິບັດວຽກງານ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ. ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດເຫັນ ແລະ ກ້າວໄປເຖິງການສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນ ກໍຄື 10 ຫົວຂໍ້ທີ່ຢູ່ໃນຄວາມຮັບຜິດຊອບຂອງອົງການປົກຄອງແຂວງ ທີ່ຈະນຳເຂົ້າພິຈາລະ ນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ; ນອກນີ້, ຍັງພ້ອມກັນຕີລາ ແລະ ຖອດຖອນບົດຮຽນກົນໄກການປະສານງານລະຫວ່າງສອງພາກສ່ວນ ເພື່ອປັບປຸງ ແລະ ຍົກສູງປະສິດທິຜົນໃນການພົວພັນ ແລະ ປະສານງານປະຕິບັດພາລະບົດບາດລະຫວ່າງ ສພຂກັບບັນດາອົງການລັດຂັ້ນແຂວງ ໃຫ້ດີຂຶ້ນເທື່ອລະກ້າວ, ຮັບປະກັນໃຫ້ການປະຕິບັດພາລະບົດບາດຂອງອົງການອຳນາດລັດຂັ້ນຕ່າງໆຂອງແຂວງ ສອດຄ່ອງກັບລະບຽບກົດໝາຍ, ການເຄື່ອນໄຫວຂອງແຕ່ລະອົງການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

**(ດີລຳພົນ ພົມມະຈັນ)**

# ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ສພຂ ເຊກອງ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງເຊກອງ ໄດ້ດຳເນີນໃນວັນທີ 15-16 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ,ເຂົ້າຮ່ວມມີທ່ານ ຂັນຕີ ສີລະວົງສາ ຮອງເຈົ້າແຂວງ,ບັນດາການນຳແລະອະດີດການນຳພັກ-ລັດຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16, ສະມາຊິກສະພາປະຊາຊົນແຂວງພ້ອມດ້ວຍຕາງໜ້າແນວລາວສ້າງຊາດ,ອົງການຈັດຕັ້ງມະຫາຊົນ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາແລະຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ໂດຍອອກເປັນມະຕິ 3 ສະບັບຄື: 1) ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບສອງວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; 2) ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການເຄື່ອນໄຫວວຽກງານ 6 ເດືອນທ້າຍປີ 2025; 3) ນິຕິກຳໃຕ້ກົດໝາຍ 3 ສະບັບ: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຊົນລະປະທານ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ຟື້ນຟູສູນປິ່ນປົວຜູ້ຕິດຢາເສບຕິດ,ຂໍ້ຕົກລົງວ່າດ້ວຍການສ້າງກົມກອງແລະພະແນກການປອດຢາເສບຕິດ.

ກອງປະຊຸມຍັງໄດ້ພິຈາລະນາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດບ້ວງປົກກະຕິປີ2025 ແລະບ້ວງເງິນເກີນແຜນປີ2024, ບົດລາຍງານກ່ຽວກັບການຈັດເກັບລາຍຮັບປີ2025,ບົດລາຍງານກ່ຽວກັບການເຊົ່າ-ສຳປະທານທີ່ດິນຂອງບໍລິສັດທາໂກ; ພ້ອມນັ້ນ,ຍັງໄດ້ຮັບຟັງການປະກອບຄຳເຫັນຂອງຄະນະປະຈຳສະພາປະຊາຊົນແຂວງ (ຄປຈ ສພຂ) ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ຊີ້ແຈງຕາມຄຳຖາມເຈາະຈີ້ມຂອງ ຄປຈສພຂ.

ທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງ ໃຫ້ຮູ້ວ່າ: ໄລຍະດຳເນີນກອງປະຊຸມ ໄດ້ມີປະຊາຊົນສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (038 156) ລວມທັງໝົດ 23 ສາຍ ເຊິ່ງເນື້ອໃນພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ, ການຊົດເຊີຍຜົນກະທົບຈາກໂຄງການພັດທະນາຕ່າງໆ;ຕໍ່ຄຳຄິດເຫັນທີ່ສົ່ງມານັ້ນ, ກອງເລຂາກອງປະຊຸມຈະໄດ້ສັງລວມ ແລະ ມອບໃຫ້ຄະນະກຳມະການທີ່ກ່ຽວຂ້ອງຂອງ ສພຂ ເພື່ອປະສານສົມທົບກັບພະແນກການ, ອົງການ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ພິຈາລະນາແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

**(ນາລີວັນ)**

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບອົງການປົກຄອງແຂວງ



(ສພຂ) - ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ໄດ້ຈັດຂຶ້ນເມື່ອວັນທີ 9 ກໍລະກົດຜ່ານມາ ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ)ໂດຍມີບັນດາທ່ານຮອງປະທານ ແລະ ກຳມະການໃນ ຄປຈສພຂ, ຕາງໜ້າຫ້ອງວ່າການແຂວງ, ພະແນກການ-ອົງການທຽບເທົ່າ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ; ທັງນີ້,ກໍເພື່ອປຶກສາຫາລືແລະແລກປ່ຽນຄຳເຫັນ ເພື່ອກ້າວໄປເຖິງຄວາມເປັນເອກະພາບກັນຕໍ່ບັນດາເນື້ອໃນໃນຂອບເຂດຄວາມຮັບຜິດຊອບຂອງອົງການປົກຄອງແຂວງ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ອັດຕະປືຊຸດທີ II ທີ່ຈະຈັດຂຶ້ນໃນຕໍ່ໜ້າ, ເອກະພາບທາງດ້ານທັດສະນະຕໍ່ບັນຫາສຳຄັນຈຳນວນໜຶ່ງ ແລະ ພ້ອມກັນຕີລາຄາ, ຖອດຖອນບົດຮຽນ ກ່ຽວກັບກົນໄກການປະສານງານລະຫວ່າງ ສພຂ ກັບອົງການປົກຄອງແຂວງ.

ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ປຶກສາຫາລື, ຄົ້ນຄວ້າ ແລະ ເປັນເອກະພາບຕໍ່ບັນຫາທີ່ສຳຄັນຄື: ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງ ສພຂ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9; ບົດລາຍງານກ່ຽວກັບສະພາບການຄຸ້ມຄອງໂຄງການຊອກຄົ້ນສຳຫຼວດ ແລະ ໂຄງການຂຸດຄົ້ນແຮ່ທາດຢູ່ແຂວງອັດຕະປື ຕິດພັນກັບການຈັດຕັ້ງປະຕິບັດຄຳສັ່ງເລກທີ 06/ຈຂ.ອປ, ລົງວັນທີ 8 ພຶດສະພາ 2025 ກ່ຽວກັບການຕິດຕາມກວດກາ ແລະ ແກ້ໄຂບັນຫາການຂຸດຄົ້ນແຮ່ຄຳຕົກຂ້ອນ, ຫີນແຮ່-ຊາຍຕາມສາຍນ້ຳລຳເຊ, ຫ້ວຍນ້ຳແລະການຄຸ້ມຄອງຂຸດຄົ້ນແຮ່ທາດຕ່າງໆ; ບົດລາຍງານການຈັດຕັ້ງປະຕິບັດວຽກງານການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍໃນໄລຍະຜ່ານມາ; ຮ່າງແຜນການກະກຽມແຜນການສ້າງນິຕິກຳໃຕ້ກົດໝາຍ ໄລຍະ 5 ປີ (2026-2030); ບົດລາຍງານການຄຸ້ມຄອງຮ້ານອາຫານ-ບັນເທີງ, ການຕ້ານ ແລະ ສະກັດກັ້ນຕໍ່ກັບໂລກເອດແລະພະຍາດຕິດຕໍ່ທາງເພດສຳພັນອື່ນໆທີ່ກຳລັງແຜ່ລະບາດ.

**(ວິນັດ ສີສຸລາດ)**



# ຍົກຖານະບົດບາດຄະນະຄຸ້ມຄອງດ່ານສາກົນພູເກືອ ທຽບເທົ່າພະແນກການ




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງອັດຕະປືຊຸດທີ II ໄດ້ດຳເນີນໃນວັນທີ 3 ກໍລະກົດຜ່ານມາ ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ ໂດຍມີບັນດາທ່ານການນຳພັກ-ລັດຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ອະດີດການນຳພັກ-ລັດຂອງແຂວງ ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມ 100 ກວ່າທ່ານ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງຄື: ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນ ເອີ້ນຊື່ວ່າ: ພະແນກການເງິນ; ໂຮມພະແນກພະລັງງານ ແລະ ບໍ່ແຮ່ ເຂົ້າກັບພະແນກອຸດສາຫະກຳ ແລະ ການຄ້າ ເອີ້ນຊື່ວ່າ; ພະແນກອຸດສາຫະກຳ ແລະ ການຄ້າ; ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເອີ້ນຊື່ວ່າ: ພະແນກກະສິກຳ ແລະ ສິ່ງແວດລ້ອມ; ໂຮມພະແນກພາຍໃນ ເຂົ້າກັບຄະນະຈັດຕັ້ງແຂວງ: (ໂອນວຽກງານຄຸ້ມຄອງພະນັກງານ-ລັດຖະກອນ, ວຽກງານພັດທະນາກົງຈັກການຈັດຕັ້ງ, ວຽກງານປົກຄອງທ້ອງຖິ່ນ, ວຽກງານແຂ່ງຂັນ-ຍ້ອງຍໍ, ວຽກງານຄຸ້ມຄອງພະລາກອນ ແລະ ວຽກງານອື່ນທີ່ສອດຄ່ອງກັບພາລະບົດບາດຂອງຄະນະຈັດຕັ້ງແຂວງ ພ້ອມທັງຍົກຍ້າຍບຸກຄະລາກອນຂອງພະແນກພາຍໃນ ເຂົ້າກັບຄະນະຈັດຕັ້ງແຂວງ; ຍົກຍ້າຍວຽກງານແຜນທີ່, ວຽກງານສາສະໜາ, ວຽກງານເອກະສານພ້ອມດ້ວຍບຸກຄະລາກອນເຂົ້າກັບຫ້ອງວ່າການແຂວງ; ຍົກຍ້າຍວຽກງານຄຸ້ມຄອງພົນລະເມືອງພ້ອມດ້ວຍບຸກຄາລະກອນເຂົ້າກັບກອງບັນຊາການປ້ອງກັນຄວາມສະຫງົບ; ຍົກຍ້າຍວຽກງານຫັນທືວໜ່ວຍວິຊາການເປັນເຈົ້າຕົນເອງ ພ້ອມດ້ວຍບຸກຄະລາກອນ ໄປຂຶ້ນກັບພະແນກການເງິນ); ໂອນວຽກງານສື່ມວນຊົນ (ວຽກງານຖະແຫຼງຂ່າວ) ພ້ອມທັງຍົກຍ້າຍບຸກຄະລາກອນທີ່ເຮັດວຽກງານດັ່ງກ່າວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ ປ່ຽນຊື່ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ເປັນຊື່ໃໝ່ເອີ້ນວ່າ: ພະແນກວັດທະນະທຳ ແລະ ການທ່ອງທ່ຽວ; ຍົກຖານະບົດບາດ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງຄະນະຄຸ້ມຄອງດ່ານສາກົນພູເກືອ ທຽບເທົ່າພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ ໂດຍມີກົງຈັກການຈັດຕັ້ງ 4 ຂະແໜງຄື: ຫ້ອງການ (ບໍລິຫານ, ຈັດຕັ້ງກວດກາ ແລະພົວພັນຊາຍແດນກົງສູນ), ຂະແໜງກວດຄົນເຂົ້າ-ອອກເມືອງ, ຂະແໜງພາສີ ແລະ ຂະແໜງກັກກັນ (ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ; ຄວບຄຸມພະຍາດຕິດຕໍ່; ຢັ້ງຢືນຄວາມຖືກຕ້ອງຂອງນ້ຳມັນເຊື້ອໄຟ; ກວດສອບຜະລິດຕະພັນ ແລະ ສິນຄ້າ).

**(ວິນັດ ສີສຸລາດ)**



# ທາບທາມທາງສຽງຊື່ຕາແສງ



(ສພຂ) - ວັນທີ 14 ກໍລະກົດຜ່ານມາ, ທ່ານ ແດງ ປະທຸມທອງຄະນະປະຈຳພັກແຂວງ, ປະທານສະພາປະ ຊາຊົນແຂວງໄຊສົມບູນ ແລະ ທ່ານ ສັງຄົມ ສູນດາລາ ຄະນະປະຈຳພັກເມືອງ, ຮອງເຈົ້າເມືອງລ້ອງແຈ້ງໄດ້ເຄື່ອນໄຫວທາບທາມທາງສຽງຕໍ່ກັບຊື່ຕາແສງ ທີ່ເມືອງອານຸວົງ ໂດຍການຕ້ອນຮັບຂອງທ່ານພັດທະນາ ສີສົມພອນ ຮອງເລຂາພັກເມືອງ, ຮອງເຈົ້າເມືອງອານຸວົງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ, ຄະນະເລຂາພັກບ້ານ, ການຈັດຕັ້ງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ.

ທ່ານ ພັດທະນາ ສີສົມພອນ ໄດ້ຜ່ານແຈ້ງການຂອງກະຊວງພາຍໃນ ສະບັບເລກທີ 08/ພນ, ລົງວັນທີ 21 ມັງກອນ 2025 ກ່ຽວກັບທິດທາງການຄົ້ນຄວ້າ, ກະກຽມສ້າງຕັ້ງຕາແສງ ເຊິ່ງແຂວງໄຊສົມບູນ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບສ້າງຕັ້ງຕາແສງ ເພື່ອເປັນໃຈກາງໃນການຄົ້ນຄວ້າ, ກຳນົດ ແລະ ສ້າງແຜນການເຄື່ອນໄຫວວຽກງານຮອບດ້ານ ກ່ຽວກັບວຽກງານສ້າງຕັ້ງຕາແສງພາຍໃນແຂວງ ໂດຍໄດ້ຈັດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ສ້າງຄວາມເປັນເອກະພາບກ່ຽວກັບຂໍ້ມູນຕາແສງ ແລະລົງສົມທົບກັບບັນດາເມືອງຄົ້ນຄວ້າ, ເກັບກຳຂໍ້ມູນຮອບດ້ານ ເພື່ອປ້ອນເຂົ້າແບບຟອມຂອງກະຊວງພາຍໃນ ເຊິ່ງຂໍ້ມູນຕາແສງທີ່ເກັບກຳໄດ້ຢູ່ຂັ້ນເມືອງ, ທາງແຂວງໄດ້ນຳເຂົ້າກອງປະຊຸມຄະນະປະຈຳພັກແຂວງ ເມື່ອວັນທີ 18 ກຸມພາ 2025 ພ້ອມພິຈາລະນາ ແລະ ໄດ້ເອກະພາບກັນຄື: ແຂວງໄຊສົມບູນປະກອບມີ 5 ເມືອງ ແລະ 14 ຕາແສງຄື: 1) ເມືອງອານຸວົງ 4 ຕາແສງຄື: ໄຊຊະນະ, ໂພນຈະເລີນ, ອ່າວໄຊ ແລະ ອອມ; 2) ເມືອງທ່າໂທມ 3 ຕາແສງຄື: ວຽງໄຊ, ເຮືອງຈະເລີນ ແລະ ແກ້ວມີໄຊ; 3) ເມືອງລ້ອງແຈ້ງ 2 ຕາແສງຄື: ຜາມີໄຊ ແລະ ສາມັກຄີໄຊ; 4) ເມືອງລ້ອງຊານ 3 ຕາແສງຄື: ສຳພັນມີໄຊ, ໂພນສະຫວາດ ແລະ ນາໂພ; 5) ເມືອງຮົ່ມ 2 ຕາແສງຄື: ຜາລະແວກ ແລະ ພູກະທະ.

ກ່ອນໜ້ານັ້ນ ຄືວັນທີ 11 ກໍລະກົດ, ທ່ານ ນາງ ຂັນກາບ ໄຊຍະກຸມມານ ເລຂາທິການສະພາປະຊາຊົນແຂວງ ແລະ ທ່ານ ສິງຫາ ເລັ່ງຊີ່ປາວ ຮອງເລຂາພັກເມືອງລ້ອງຊານ, ປະທານກວດກາພັກ-ລັດເມືອງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ກໍໄດ້ເຄື່ອນໄຫວທາບທາມທາງສຽງຕໍ່ກັບຊື່ຕາແສງຢູ່ເມືອງລ້ອງຊານ.

**(ອຳໄພພອນ ແກ້ວວິໄລ ແລະ ແສງຕາວັນ ລັດຕະນະວົງ)**





## ປະທານ...

(ຕໍ່ຈາກໜ້າ 1)

ຖານບ້ານໃກ້ເຮືອນຄຽງທີ່ດີມາແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ກໍຄືລະຫວ່າງ 2 ກະຊວງປ້ອງກັນປະເທດ ລາວ-ໄທ ໃຫ້ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຮ່ວມມືລະຫວ່າງສອງກະຊວງປ້ອງກັນປະເທດ ລາວ-ໄທ ໃນໄລຍະຜ່ານມາ ເຊິ່ງສອງຝ່າຍໄດ້ມີການຮ່ວມມືກັນຢ່າງແໜ້ນແຟ້ນທາງດ້ານການຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ, ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຕາມຊາຍແດນ, ການຂ້າມຊາຍແດນແບບຜິດກົດໝາຍ ແລະ ການຄ້າຂາຍສິ່ງທີ່ຜິດກົດໝາຍຕ່າງໆ ເພື່ອເຮັດໃຫ້ຊາຍແດນຂອງສອງປະເທດເປັນຊາຍແດນແຫ່ງ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມືພັດທະນາຢ່າງແທ້ຈິງ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ ພ້ອມທັງສະແດງຄວາມຊົມເຊີຍຕໍ່ຜົນການພົບປະເຮັດວຽກລະຫວ່າງ 2 ກະຊວງປ້ອງກັນປະເທດ ລາວ-ໄທ ທີ່ໄດ້ທົບທວນຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ, ທັງໄດ້ຮ່ວມກັນແລກປ່ຽນບົດຮຽນ ແລະປະສົບການ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ; ທ່ານປະທານສະພາແຫ່ງຊາດ ຍັງຕີລາຄາສູງການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ, ແຈ້ງໃຫ້ຊາບສະພາບການພົ້ນເດັ່ນຂອງ ສປປລາວ ແລະ ສະພາແຫ່ງຊາດ ພ້ອມທັງສະເໜີໃຫ້ສອງກະຊວງ ສືບຕໍ່ຈັດຕັ້ງຜັນຂະຫຍາຍບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມື (MOU) ລະຫວ່າງສອງກະຊວງ ເພື່ອປະກອບສ່ວນເສີມຂະຫຍາຍການພົວພັນຮ່ວມມືໃຫ້ເປັນຮູບປະທຳຍິ່ງໆຂຶ້ນ, ສືບຕໍ່ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ ແລະ ສືບຕໍ່ປັກຫຼັກໝາຍຊາຍແດນທາງບົກ ກໍຄືສືບຕໍ່ປຶກສາຫາລືບັນຫາຊາຍແດນລະຫວ່າງລາວ-ໄທ ໃຫ້ມີຄວາມຄືບໜ້າ ເພື່ອອຳນວຍຄວາມສະດວກແກ່ການໄປມາຫາສູ່ຂອງປະຊາຊົນກັບປະຊາຊົນຂອງສອງປະເທດ ໃຫ້ນັບມື້ນັບມີຄວາມປອດໄພ.

ທ່ານ ພົອ. ຊົງວິດ ໜູນພັກດີ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງຜົນສຳເລັດການພົບປະເຮັດວຽກລະຫວ່າງສອງກະຊວງປ້ອງກັນປະເທດ ໄທ-ລາວ ທີ່ໄດ້ພ້ອມກັນຕີລາຄາຄືນການພົວພັນຮ່ວມມືຂອງສອງກະຊວງ ກໍຄືການພົວພັນຮ່ວມມືຂອງສອງປະເທດ ນັບຕັ້ງແຕ່ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 19 ທັນວາ 1950 ເຊິ່ງມາຮອດປີນີ້ ແມ່ນຄົບຮອບ 75 ປີ ແລະ ຍັງໄດ້ປຶກສາຫາລືທິດທາງການຮ່ວມມືລະຫວ່າງສອງປະເທດ ກໍຄືລະຫວ່າງສອງກະຊວງ; ພ້ອມດຽວກັນນີ້, ທ່ານຜູ້ບັນຊາການທະຫານສູງສຸດ ຍັງໄດ້ແລກປ່ຽນຄຳຄິດຄຳເຫັນກ່ຽວກັບສະພາບການພາກພື້ນ ແລະ ສາກົນ ແລະ ແຈ້ງສະພາບການທີ່ພົ້ນເດັ່ນຂອງລາຊະອານາຈັກໄທ ໃຫ້ທ່ານປະທານສະພາແຫ່ງຊາດຊາບອີກດ້ວຍ.

## ສພຊ...

(ຕໍ່ຈາກໜ້າ 1)

ທານກວດກາພັກ-ລັດສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ມີສະຫາຍ ສຸກຄຳເພັດ ເຮືອງບຸດດີ ກຳມະການປະຈຳພັກ, ຮອງປະທານຄະນະກວດກາສູນກາງພັກ, ອົງການກວດກາແຫ່ງລັດ ແລະ ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ບັນດາສະຫາຍໃນຄະນະປະຈຳພັກ, ຄະນະບໍລິຫານງານພັກ, ຄະນະກວດກາພັກ-ລັດ ພ້ອມດ້ວຍເລຂາ, ຮອງເລຂາ ແລະ ກຳມະການບັນດາຮາກຖານພັກ, ຜູ້ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນ, ສະມາຊິກພັກຂັ້ນຫົວໜ້າພະແນກຂຶ້ນໄປ ທົ່ວ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ຄຳໃບ ດຳລັດ ມີຄຳເຫັນກ່າວປິດວ່າ: ກອງປະຊຸມໄດ້ດຳເນີນເປັນເວລາ 1 ວັນ ເຊິ່ງເຕັມໄປດ້ວຍບັນຍາກາດທີ່ຟົດຟື້ນ, ມີເນື້ອໃນສຳຄັນເລິກເຊິ່ງ, ບັນດາຜູ້ແທນທີ່ເຂົ້າຮ່ວມມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງຕົນ ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາຕໍ່ບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2024 ຂອງຄະນະກວດກາພັກ-ລັດສະພາແຫ່ງຊາດເຊິ່ງຊີ້ໃຫ້ເຫັນດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ທັງເອກະພາບຕໍ່ທິດທາງແຜນການເຄື່ອນໄຫວປີ 2025 ໂດຍສະເພາະຈະສຸມໃສ່ວຽກງານກວດກາພັກ-ລັດ ແລະ ຕ້ານການສໍ້ລາດບັງຫຼວງພາຍໃນສະພາແຫ່ງຊາດ ໃຫ້ບັນລຸຕາມລະດັບຄາດໝາຍທີ່ວາງໄວ້ ຕິດພັນກັບການກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຂະບວນການຂໍ້ແຂ່ງຂັນຮັກຊາດ ແລະພັດທະນາ; ນອກນີ້, ຍັງໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະຫຼຸບວຽກງານກວດກາທົ່ວປະເທດ ປະຈຳປີ 2024 ແລະ ບັນດານິຕິກຳກ່ຽວກັບວຽກງານກວດກາ ຈຳນວນ 7 ເອກະສານ.

ໃນໄລຍະ 1 ປີຜ່ານມາ ບັນດາໜ່ວຍພັກຮາກຖານ, ຄະນະພັກຮາກຖານ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານທົ່ວ ສພຊ ໄດ້ໃຫ້ຄວາມສຳຄັນ ແລະຍົກສູງຄວາມຮັບຜິດຊອບຂອງຕົນຕໍ່ວຽກງານປັບປຸງກໍ່ສ້າງ ແລະ ຂະຫຍາຍມະຫາຊົນຜູ້ກ້າວໜ້າເຂົ້າເປັນສະມາຊິກພັກ ເຮັດໃຫ້ຈຳນວນສະມາຊິກພັກເພີ່ມຂຶ້ນ, ຄຸນນະພາບກໍມີການປັບປຸງດີຂຶ້ນ; ແຕ່ລະຮາກຖານພັກ ໄດ້ມີການສືບຕໍ່ເຜີຍແຜ່-ຮ່ຳຮຽນກົດລະບຽບພັກ, ເຜີຍແຜ່ບັນດາມະຕິ, ຄຳສັ່ງຂອງສູນກາງພັກ ເປັນຕົ້ນມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ (ສະໄໝທີ XI) ແນໃສ່ເຮັດໃຫ້ສະມາຊິກພັກ, ພະນັກງານ ໄດ້ຮັບຮູ້, ເຂົ້າໃຈ ແລະ ກຳໄດ້ຄວາມສຳຄັນ, ຄວາມຈຳເປັນຂອງວຽກງານປັບປຸງກໍ່ສ້າງຮາກຖານການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ເປັນຕົ້ນແມ່ນການປັບປຸງການຈັດຕັ້ງພັກ-ຄະນະພັກ ແລະສະມາຊິກພັກ, ຍົກສູງຄວາມຮັບຜິດຊອບການເມືອງຂອງຄະນະພັກ ແລະ ສະມາຊິກພັກທຸກສະຫາຍ ຕໍ່ການແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ ໃນການນຳພາຂອງຄະນະພັກ ແລະ ຄວາມຮັບຜິດຊອບຂອງສະມາຊິກພັກ, ເຫັນວ່າໄດ້ດຳເນີນກວດກາປົກກະຕິຕາມແຜນ, ສາມາດເຫັນໄດ້ດ້ານດີ-ຜົນສຳເລັດ, ດ້ານອ່ອນ-ຂໍ້ຄົງຄ້າງ ໃນການນຳພາຂອງຄະນະພັກ, ພົບເຫັນປາກົດຫຍໍ້ທໍ້ທີ່ເກີດຂຶ້ນໃນຖັນແຖວສະມາຊິກພັກ-ພະນັກງານຈຳນວນໜຶ່ງຍັງມີການລະເມີດຕໍ່ກົດລະບຽບພັກ ແລະ ກົດໝາຍ ຈຶ່ງໄດ້ມີການລົງວິໄນຕໍ່ຜູ້ກະທຳຜິດ.

ສະຫາຍ ຄຳໃບ ດຳລັດ ໄດ້ຮຽກຮ້ອງໃຫ້ທຸກຮາກຖານພັກ ສືບຕໍ່ນຳພາ-ຊີ້ນຳວຽກງານກວດກາພັກ, ກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງຂອງສະພາແຫ່ງຊາດ ໃຫ້ເປັນປົກກະຕິ, ຕໍ່ເນື່ອງ; ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານກວດກາໃນຕໍ່ໜ້າ ໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ ແລະແກ້ໄຂບັນດາຂໍ້ຄົງຄ້າງໃນໄລຍະຜ່ານມາ, ສະຫາຍໄດ້ມີຄຳເຫັນເພີ່ມຕື່ມດັ່ງນີ້:

1. ຄະນະກວດກາຂອງຮາກຖານພັກທຸກຂັ້ນ ສືບຕໍ່ຄົ້ນຄວ້າ, ຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ ແລະ ນິຕິກຳຕ່າງໆຂອງພັກ ໂດຍສະເພາະແມ່ນເອົາໃຈໃສ່ຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມວຽກງານກວດກາທົ່ວປະເທດ, ກອງປະຊຸມປະຈຳປີຂອງຄະນະກວດກາສູນກາງພັກ ແລະ ວຽກງານຈຸດສຸມທີ່ຕ້ອງສືບຕໍ່ສູ້ຊົນປະຕິບັດໃນປີ 2025 ໃຫ້ເປັນອັນລະອຽດ, ບົນຈິດໃຈບຸກບືນກວ່າເກົ່າ ເຮັດໃຫ້ວຽກງານຕິດຕາມກວດກາ ແລະ ຕ້ານການສໍ້ລາດບັງຫຼວງ ມີການຫັນປ່ຽນໃໝ່ຢ່າງຕັ້ງໜ້າ;

2. ເອົາໃຈໃສ່ຊີ້ນຳ, ຊຸກຍູ້ ຜູ້ຮັບຜິດຊອບວຽກງານກວດກາຢູ່ແຕ່ລະຮາກຖານພັກ ປະຕິບັດໜ້າທີ່ລາຍງານໃຫ້ແກ່ຄະນະກວດກາພັກ-ລັດສະພາແຫ່ງຊາດ; ຕິດຕາມ, ກວດກາການເຄື່ອນໄຫວຂອງສະມາຊິກພັກ, ພະນັກງານ ແລະການປະຕິບັດລະບອບປະຊຸມ-ສ່ອງແສງ, ລາຍງານຂອງບັນດາຮາກຖານພັກ ໃຫ້ດຳເນີນ ແລະ ສະຫຼຸບ, ລາຍງານເປັນປົກກະຕິ;

3. ສືບຕໍ່ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ, ຂໍ້ກຳນົດຕ່າງໆຂອງພັກ ລວມທັງການປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດ, ອັນໃດທີ່ຄວນສົ່ງເສີມ ແລະອັນໃດຍັງຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເພື່ອເຮັດໃຫ້ການປະຕິບັດກົດລະບຽບຂອງພັກ, ການຕິດຕາມກວດກາແບບແຜນວິທີເຮັດວຽກຂອງຄະນະພັກແຕ່ລະຂັ້ນ, ກຳສະພາບພະນັກງານການນຳ ແລະສະມາຊິກພັກ-ພະນັກງານ ໃຫ້ແໜ້ນ;

4. ເອົາໃຈໃສ່ຕິດຕາມກວດກາການຄຸ້ມຄອງລັດ ເປັນຕົ້ນການປະຕິບັດພາລະບົດບາດ, ໜ້າທີ່, ການຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງລັດ ເຊັ່ນ: ກວດກາໂຄງການກໍ່ສ້າງລົງທຶນຂອງລັດທີ່ມີມູນຄ່າສູງເກີນຄວາມເປັນຈິງ ທີ່ຂຶ້ນກັບສະພາແຫ່ງຊາດຄຸ້ມຄອງ ໂດຍສົມທົບກັບອົງການກວດກາແຫ່ງລັດ, ການປະມູນຈັດຊື້-ຈັດຈ້າງ ໃຫ້ດຳເນີນໄປຖືກຕ້ອງຕາມສັນຍາ ແລະ ລະບຽບກົດໝາຍ;

5. ເອົາໃຈໃສ່ໂຄສະນາເຜີຍແຜ່ບັນດານິຕິກຳ, ເອກະສານສຳຄັນ ແລະຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບວຽກງານກວດກາ ໃຫ້ທັນເວລາ ເພື່ອໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນໄດ້ເຊື່ອມຊຶມ, ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດເປັນຢ່າງດີ.




# ນິທານເສນາໝາກຂີ້ກາ

**# ດົ້ນກົບເມກ**

ຂໍ້ຄິດເລື່ອງເສນາໝາກຂີ້ການີ້ ຄົນລາວຮູ້ຈັກມາດົນນານ ເພາະມັນເກີດຂຶ້ນໃນເລື່ອງສຽວສະຫວາດ ທີ່ຍົກຕົວຢ່າງບັນຫາການຢາກກໍ່ສ້າງລູກນ້ອງ ກໍຄືເສນາທີ່ຈິງໃຈຕໍ່ໜ້າທີ່ວຽກງານ ເຊິ່ງເອົາໝາກຂີ້ກາມາທົດສອບໃຫ້ເສນາອາໝາດແຕ່ລະຄົນໄປລອງຊີມລົດຊາດ, ແລ້ວໃຫ້ທຸກຄົນທີ່ໄດ້ຊີມນັ້ນບອກລົດຊາດຄວາມຈິງວ່າ: ມັນຂົມ ຫຼື ຫວານ; ການທົດສອບແບບນີ້ແມ່ນໄດ້ຜົນ, ມີຜູ້ທີ່ກ້າຫານພຽງໜ້ອຍຄົນເພາະສ່ວນໃຫຍ່ເວົ້າບໍ່ກົງຄວາມຈິງ.

ເປັນຫຍັງຜູ້ຂຽນຈຶ່ງຢາກຍົກມາແລກປ່ຽນຕື່ມ, ຍ້ອນວ່າຍັງມີຄຳຖາມເຈາະຈີ້ມຕື່ມວ່າ ເປັນຫຍັງພວກເສນາບາງຄົນຈຶ່ງກ້າເວົ້າອອກມາວ່າ: ລົດຊາດຂອງໝາກຂີ້ການັ້ນຫວານ ທັງໆທີ່ມັນມີລົດຊາດຂົມ ຫຼື ຍ້ອນວ່າໝາກຂີ້ການັ້ນເປັນໝາກໄມ້ທີ່ພະຍາມອບໃຫ້ຊີມເລີຍບໍ່ກ້າບອກຄວາມຈິງວ່າມັນຂົມ ເພາະເກງກົວອຳນາດພະຍາ ຫຼື ເວົ້າອີກຄຳໜຶ່ງອາດຢ້ານຜິດໃຈພະຍາ, ຈຶ່ງແກ້ງເວົ້າເອົາໃຈພະຍາຜູ້ເປັນຫົວໜ້າ; ຖ້າວ່າມີພະຍາ ຫຼື ຫົວໜ້າທີ່ລູກນ້ອງຢ້ານຫຼາຍ ຈົນບໍ່ກ້າເວົ້າຄວາມຈິງນັ້ນ ກໍເປັນສິ່ງໜ້າຄິດທີ່ສຸດ ເພາະມັນຈະມີຜູ້ສືບທອດຄວາມຄິດແບບເສນາໝາກຂີ້ການັ້ນ ຕໍ່ໄປພາຍໜ້າ; ຖ້າວ່າຫົວໜ້າຕ້ອງການຄວາມຈິງໃຈ, ຕ້ອງການຜູ້ກ້າເວົ້າ-ກ້າຫານຊີ້ແຈງຄວາມຈິງເຖິງວ່າຈະຜິດໃຈຕົນເອງ, ແຕ່ສິ່ງທີ່ເຂົານຳສະເໜີພັດແມ່ນຄວາມຈິງ ເຮົາຕ້ອງເປີດໃຈກວ້າງກ້າຍອມຮັບ ເພາະມີແຕ່ຄວາມຈິງເທົ່ານັ້ນ ຈຶ່ງຈະແກ້ປັນຫາໃຫ້ຖືກຕ້ອງໄດ້.

ຄວາມຄິດເສນາໝາກຂີ້ກາເກີດຂຶ້ນຍ້ອນມັນຢ້ານອຳນາດຫົວໜ້າຜູ້ເປັນພະຍາບໍ່ພໍໃຈຖ້າເວົ້າຄວາມຈິງ ເຊິ່ງບາງເທື່ອເສນາດັ່ງກ່າວ ອາດເຄີຍເຫັນນິດໄສ-ຫົວໃຈຂອງຫົວໜ້າມາກ່ອນແລ້ວ ຈຶ່ງບໍ່ກ້າເວົ້າຄວາມຈິງ!

ຂໍສະເໜີແລກປ່ຽນ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

ນະຜູ້ແທນລະຫວ່າງສອງປະເທດໃຫ້ມີຄວາມແໜ້ນແຟ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະເກີດດອກອອກຜົນຢ່າງບໍ່ຢຸດຢັ້ງ; ພ້ອມທັງສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດຂອງປະຊາຊົນກູບາອ້າຍນ້ອງຍາດມາໄດ້ໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດໃນໄລຍະຜ່ານມາ ພາຍໃຕ້ການນຳພາອັນກ້າແກ່ນ ແລະ ໜັກແໜ້ນຂອງພັກກອມມູນິດກູບາ ເຖິງແມ່ນວ່າຈະຖືກປິດລ້ອມມາເປັນເວລາກວ່າ 6 ທົດສະວັດ, ແຕ່ ສ.ກູບາ ຍັງສືບຕໍ່ມີການພັດທະນາ ແລະ ເຕີບໃຫຍ່ເຂັ້ມແຂງ, ມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບແລະເປັນລະບຽບຮຽບຮ້ອຍ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງນັບມື້ດີຂຶ້ນ ອັນເຮັດໃຫ້ບົດບາດ ແລະອິດທິພົນຂອງກູບາ ໄດ້ຮັບການເຊີດຊູໃຫ້ສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ. ພ້ອມນີ້, ຍັງໄດ້ແຈ້ງໃຫ້ຊາບໂດຍຫຍໍ້ການເຄື່ອນໄຫວຂອງສະມາຄົມມິດຕະພາບ ລາວ-ກູບາ ເຊິ່ງໄດ້ເຄື່ອນໄຫວກິດຈະກຳຮ່ວມກັບສະຖານເອກອັກຄະລັດຖະທູດແຫ່ງ ສ.ກູບາປະຈຳ ສປປລາວ ໃນໂອກາດວັນສຳຄັນຕ່າງໆ ຂອງສອງພັກ, ສອງຊາດຢ່າງປົກກະຕິເປັນຕົ້ນ: ຈັດພິທີປາຖະກະຖາສະເຫຼີມສະຫຼອງຄົບຮອບ 50 ປີ ແຫ່ງການສ້າງສາຍພົວພັນການທູດ ລະຫວ່າງ ສປປລາວ ແລະ ສ.ກູບາ (4/11/1974-4/11/2024) ທີ່ແຂວງຫົວພັນ, ນອກນັ້ນ ໄດ້ມີການແຂ່ງຂັນຂຽນບົດຄວາມ ແລະ ກິດຈະກຳຕ່າງໆ ທີ່ມີຫົວຂໍ້ກ່ຽວກັບຊີວິດ ແລະ ຜົນງານການເຄື່ອນໄຫວເຮັດວຽກຂອງສະຫາຍ ໂຮເຊ ມາຣ໌ຕີ (José Martí) ທີ່ໂຮງຮຽນມັດທະຍົມສົມບູນ ມິດຕະພາບ ລາວ-ກູບາ ດົງບັງ ແລະ ມະຫາວິທະຍາໄລແຫ່ງຊາດ; ໃນຕົ້ນເດືອນພະຈິກ 2024 ຜ່ານມາ, ສະມາຄົມມິດຕະພາບ ລາວ-ກູບາ ກໍໄດ້ຕ້ອນຮັບ ແລະ ຕິດຕາມຢ່າງໃກ້ຊິດ ໃນການເຄື່ອນໄຫວຂອງສະຫາຍ ເອສເຕບານ ລາໂຊ ເຮີນານເດສ (Esteban Lazo Hernández) ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ ພ້ອມດ້ວຍຄະນະ ໃນການຢ້ຽມຢາມ ສປປລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມການສະເຫຼີມສະຫຼອງຄົບຮອບ 50 ປີ ແຫ່ງການສ້າງສາຍພົວພັນການທູດ ລະຫວ່າງ ສປປລາວ ແລະ ສ.ກູບາ.

ສະຫາຍ ເຈຣາຣ໌ໂດ ເປຢາລເບຣ໌ ພໍຣ໌ທັລ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ແຈ້ງໃຫ້ຊາບກ່ຽວກັບຜົນການພົບປະກັບຮອງລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປລາວ ແລະການເຂົ້າຢ້ຽມຂໍ່ານັບຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ພ້ອມທັງຕີລາຄາສູງ ແລະຊົມເຊີຍຕໍ່ບັນດາຜົນສຳເລັດທີ່ປະຊາຊົນລາວຍາດມາໄດ້ພາຍໃຕ້ການນຳພາຂອງພັກ ປປລາວ ເຊິ່ງເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ ແລະ ໄດ້ຍົກສູງບົດບາດຂອງ ສປປລາວ ນັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ; ອວຍພອນໃຫ້ພັກ, ລັດແລະປະຊາຊົນລາວອ້າຍນ້ອງ ຈົ່ງປະສົບຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ໃຫ້ປາກົດຜົນເປັນຈິງ.

ສອງຝ່າຍມີຄວາມພາກພູມໃຈ ເຖິງວ່າໃນສະພາບການພາກພື້ນ ແລະ ສາກົນ ມີການຜັນແປຢ່າງວ່ອງໄວ ແລະ ສັບສົນແຕ່ສາຍພົວພັນມິດຕະພາບ, ຄວາມສາມັກຄີແລະການຮ່ວມມືທີ່ເປັນມູນເຊື້ອລະຫ່ວາງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງຮອບດ້ານ ແລະ ເຂົ້າສູ່ລວງເລິກ ເປັນຕົ້ນແມ່ນການພົວພັນຮ່ວມມືດ້ານການເມືອງ, ດ້ານການສຶກສາ-ກິລາ, ສາທາລະນະສຸກ, ກະສິກຳ ແລະ ອື່ນໆ ເຊິ່ງໄດ້ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດຢ່າງແທ້ຈິງ.




## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ຈຳເຂດເລືອກຕັ້ງທີ 7 ຮ່ວມກັບທ່ານ ເພັງນິລັນ ຄຳພັນເພັງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7, ປະທານສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ແລະ ສພຂ ໄຊຍະບູລີ ຊຸດທີ II ຢູ່ກອງບັນຊາການທະຫານແຂວງ ໂດຍມີຄະນະພັກ-ຄະນະບັນຊາກອງບັນຊາການທະຫານແຂວງ, ກອງພົນທີ 2, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ພ້ອມດ້ວຍພະນັກງານຫຼັກແຫຼ່ງອ້ອມຂ້າງກອງບັນຊາການທະຫານແຂວງເຂົ້າຮ່ວມ; ທັງນີ້, ກໍເພື່ອໃຫ້ຄະນະພັກ-ຄະນະບັນຊາ ແລະ ພະນັກງານຫຼັກແຫຼ່ງ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ບັນດາມະຕິທີ່ 2 ກອງປະຊຸມໄດ້ຮັບຮອງເອົາ ເພື່ອພ້ອມກັນເປັນເຈົ້າການຜັນຂະຫຍາຍໃຫ້ເກີດຜົນຕົວຈິງ ແລະເປັນພື້ນຖານໃຫ້ຄະນະພັກ-ຄະນະບັນຊາສືບຕໍ່ນຳໄປສຶກສາອົບຮົມ ແລະ ຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ທັງປັບປຸງແລະຍົກສູງທັດສະນະຫຼັກໝັ້ນ, ຄຸນທາດການເມືອງ ຂອງພະນັກງານຫຼັກແຫຼ່ງແຕ່ລະຂັ້ນ ໃຫ້ໜັກແໜ້ນ, ມີຄວາມເດັດດ່ຽວ, ເປັນເຈົ້າການຕອບຕ້ານທຸກກົນອຸບາຍມ້າງເພທຳລາຍຂອງພວກອິດທິກຳລັງປໍລະປັກ, ມີແບບແຜນການດຳລົງຊີວິດທີ່ປອດໃສ, ມີຄວາມສາມັກຄີພາຍໃນເປັນເອກະພາບ, ເປັນກ້ອນກຳລັງແຮງໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າ.

ໃນໂອກາດນີ້, ທ່ານ ພັອ. ບຸນພົບ ວິໄລສັກ ຮັກສາການຫົວໜ້າການເມືອງກອງບັນຊາການທະຫານແຂວງ ໄດ້ລາຍງານໂດຍສັງເຂບສະພາບການຈັດຕັ້ງປະຕິບັດວຽກງານ; ຈາກນັ້ນ, ທ່ານ ເພັງນິລັນ ຄຳພັນເພັງ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ພິຈາລະນາຮັບຮອງເອົາຫຼາຍບັນຫາສຳຄັນເປັນຕົ້ນ: ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; ບົດລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່; ບົດລາຍງານການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ; ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX; ມະຕິຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ. ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງເປັນຕົ້ນບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; ບົດລາຍງານການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍທົ່ວແຂວງ ໄລຍະ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີ (2026-2030); ການປະເມີນນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ 3 ສະບັບ ຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊ້າງບ້ານ; ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ແລະ ການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 11 ເມືອງຂອງແຂວງໄຊຍະບູລີ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານຮອບດ້ານທີ່ຍາດມາໄດ້ໃນໄລຍະຜ່ານມາ, ຕີລາຄາສູງຕໍ່ການປະກອບສ່ວນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຕະຫຼອດມາທັງຍົກໃຫ້ເຫັນສະພາບການພົ້ນເດັ່ນຂອງໂລກແລະພາຍໃນປະເທດ ພ້ອມທັງເນັ້ນໜັກແລະໃຫ້ທິດຊີ້ນຳຄະນະພັກ-ຄະນະນຳ ກໍຄືນາຍ ແລະ ພົນທະຫານ ຈົ່ງພ້ອມກັນສຶກສາຄົ້ນຄວ້າ, ຖອດຖອນເອົາບົດຮຽນ, ວິເຄາະວິໄຈ ໃຫ້ເຫັນທາດແທ້ ແລະ ພຶດຕິກຳເພື່ອມ້າງເພທຸກກົນອຸບາຍທີ່ຫວັງທຳລາຍປະເທດຊາດ ທັງຮັກສາໄດ້ຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດກົມກອງ ກໍຄືຄອບຄົວ ມີຄວາມເຂັ້ມແຂງເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ.

**(ນາງ ອາລິນ ສຸພົມມະປະກິດ)**



## ສຸຂະພາບກາຍໃຈ

# ອາຫານທີ່ບໍ່ຄວນກິນຕອນທ້ອງວ່າງ

# ຮຽບຮຽງໂດຍ: ທິວກະທີ









ເມື່ອເຮົາທ້ອງຫວ່າງ ຫຼາຍໆຄົນກໍຄິດວ່າກິນຫຍັງກະໄດ້ເພື່ອໃຫ້ເຊົາຫິວແລະຢູ່ທ້ອງ ໂດຍສະເພາະກໍແມ່ນບັນດາຜູ້ທີ່ກໍາລັງຫຼຸດນໍ້າໜັກ ແຕ່ທຸກຄົນຮູ້ບໍ່ວ່າອາຫານບາງຊະນິດກໍບໍ່ເໝາະສໍາລັບກິນຕອນທ້ອງວ່າງ ມື້ນີ້ຄໍລໍາ "ສຸກສະບາຍກາຍໂລຄາ" ຈະມາແນະນໍາ 5 ອາຫານທີ່ບໍ່ຄວນກິນຕອນທ້ອງວ່າງວ່າມີຫຍັງແດ່ ມາເບິ່ງນໍາກັນເລີຍ.

**1. ໝາກໄມ້ທີ່ມີລົດສົ້ມ ແລະ ວິຕາມິນຊີຫຼາຍ**

ເຮົາມັກຈະໄດ້ຍິນວ່າວິຕາມິນຊີ ຄວນກິນຫຼັງອາຫານ ເປັນເຫດຜົນດຽວກັນກັບໝາກໄມ້ລົດສົ້ມຕ່າງໆ ເຊັ່ນ: ໝາກກ້ຽງ, ໝາກນາວ, ໝາກນັດ, ແລະໝາກໄມ້ທີ່ມີລົດສົ້ມອື່ນໆ ເພາະລົດຊາດສົ້ມແລະວິຕາມິນຊີ ມີສ່ວນເຮັດໃຫ້ກະເພາະມີອາການບາດເຈັບ ຫຼື ແສບ ໂດຍສະເພາະຄົນເຈັບທີ່ເປັນພະຍາດກະເພາະ ແລະ ລໍາໄສ້ ຫຼື ລະບົບຍ່ອຍອາຫານ.

**2. ອາຫານລົດຊາດເຜັດ**

ການກິນອາຫານທີ່ມີລົດຊາດເຜັດໃນຕອນທ້ອງວ່າງນັ້ນ ມັນຈະເຂົ້າໄປກະຕຸ້ນລະບົບຍ່ອຍອາຫານ ເຮັດໃຫ້ມີອາການລະຄາຍເຄືອງ ທັງໄປທໍາລາຍນໍ້າເມືອກທີ່ເຄືອບກະເພາະຈົນນໍາໄປສູ່ການເຈັບກະເພາະ.

**3. ນົມສົ້ມ ຫຼື ໂຢເກີດ**

ໂຢເກີດມີໂພໄບໂອຕິກ ເຊິ່ງເປັນເຊື້ອແບັກທີເລຍດີທີ່ຊ່ວຍຮັກສາລໍາໃສ້ໃຫ້ມີສຸຂະພາບດີ ແຕ່ຖ້າກິນໃນຕອນທ້ອງວ່າງ ອາຊິດຣາຍໂດຄໍຣິກ ທີ່ກະເພາະລັ່ງອອກມາຈະສົ່ງຜົນບໍ່ດີຕໍ່ແບັກທີເລຍໄດ້; ສະນັ້ນ, ຈຶ່ງຄວນຮັບປະທານຫຼັງຈາກກິນອາຫານແມ່ນດີທີ່ສຸດ.

**4. ອາຫານທີ່ມີທາດແປ້ງ ແລະ ນໍ້າຕານຫຼາຍ**

ສໍາລັບອາຫານເຊົ້າ ເຊິ່ງເປັນຄາບທໍາອິດຂອງມື້ ຫຼັງຈາກຫຼາຍຊົ່ວໂມງທີ່ທ້ອງວ່າງ ການກິນອາຫານທີ່ມີທາດແປ້ງ ແລະ ນໍ້າຕານຫຼາຍ ເຊັ່ນ: ທັນຍາພືດ, ເຂົ້າຈີ່ຂາວທີ່ມີກວນໝາກໄມ້ຕ່າງໆອາດຈະເຮັດໃຫ້ຮ່າງກາຍດື້ຕໍ່ອິນຊູລິນໃນໄລຍະຍາວອາດຈະເພີ່ມຄວາມສ່ຽງຕໍ່ພະຍາດເບົາຫວານ ລວມທັງພະຍາດໝາກໄຂ່ຫຼັງນໍາອີກ.

**5. ຊາ, ກາເຟ ແລະ ນໍ້າອັດລົມ**

ເມື່ອທ້ອງວ່າງຮ່າງກາຍຈະປ່ອຍອາຊິດຣາຍໂດຄໍຣິກ ເຊິ່ງເຮັດໃຫ້ສະພາບແວດລ້ອມກະເພາະອາຫານເປັນກົດ ແລະຄາເຟອີນໃນຊາ, ກາເຟ ແລະ ນໍ້າອັດລົມ ກະຕຸ້ນໃຫ້ມີຄວາມເປັນກົດຂຶ້ນຫຼາຍ ເຊິ່ງຖ້າບໍ່ມີອາຫານຢູ່ໃນກະເພາະອາຫານ ກົດນີ້ຈະທໍາລາຍກະເພາະ ເຮັດໃຫ້ເກີດພະຍາດກະເພາະອາຫານ ແລະ ນໍາໄປສູ່ການເປັນກົດໄຫຼກັບ ເພື່ອປ້ອງກັນກົດໃນກະເພາະ ຄວນກິນອາຫານເລັກນ້ອຍກ່ອນທີ່ຈະກິນຊາ, ກາເຟ ຫຼື ນໍ້າອັດລົມຕ່າງໆ.

**www.sanook.com**







ອາດ ກະວີລາວ

# ນໍ້າຖ້ວມທາງ

# ໂອທອງ

| | |
|---|---|
| ❊ ຝົນຕົກລົມຫຼັ່ງເລື້ອຍ | ໄຫຼລວດທາງທຽວ |
| ນໍ້າອັ່ງ ໂຮມເປັນວັງ | ຍາກເຫຍີງຍາມຍ້າຍ |
| ໃຜກໍ ໂວຍໂວຍເວົ້າ | ຄໍາເຄືອງຄືຄຽດ |
| ຕິແຕ່ ທາງທີ່ສ້າງ | ດູດ້ອຍມາດຖານ |
| ❊ ສັງບໍ່ແນມເບິ່ງເບື້ອງ | ຮູທໍ່ແຄມທາງ |
| ຂີ້ເຫຍື້ອຫຼາຍອັນອັດ | ໂອບເອົາອິມຂັ້ນ |
| ໃຜນໍ ເປັນຄົນຖິ້ມ | ໂລເລເລີຍອັ້ງ |
| ພໍຝົນເທຖອກເທັ້ງ | ໄຫຼປ້ານປ່ອງລະບາຍ |
| ❊ ເບິ່ງແມ ບາງບ່ອນເບື້ອງ | ຄອງເປີດແຄມທາງ |
| ໃຜນໍ ເປັນຄົນວາງ | ທໍ່ຖົມຍາວເຍີ້ນ |
| ແຕ່ບໍ່ແປງຮູໃຫ້ | ໄຫຼລົງເຖິງທໍ່ |
| ນໍ້າຈຶ່ງຂັງອໍອັ່ງຖ້ວມ | ຄາຄ້າງຢູ່ເທິງ |
| ❊ ເປັນນໍາໃຜທ່ຽງແທ້ | ທາງຍາກຍາມຝົນ |
| ຢ່າຕູໄປໂລເລ | ໃສ່ຊຸມແປງສ້າງ |
| ແຕ່ວ່າ ເປັນໄປໄດ້ | ຄືຄໍາຕວງຕູ່ |
| ຄັນວ່າ ຄົນທີ່ສ້າງ | ຫວັງໄດ້ແຕ່ເງິນ |



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສຽມທ້ຽນ

❊ **ຊົມເຊີຍ**ການປະກາດໃຊ້ **ບັດປະຈໍາຕົວແບບດິຈິຕອນ** ໃນວັນທີ 30 ກໍລະກົດຜ່ານມາ ຂໍຊົມເຊີຍອີກຄັ້ງ ແລະ ຫວັງວ່າສັງຄົມລາວ ຊິກ້າວໄກພັດທະນາ ລື່ນເດີມດາກໍ ຂໍໃຫ້ມີຜົນໄດ້ ຕາມແຜນອາງອາດ ຂໍໃຫ້ຊາດພຸ່ງພົ້ນ ຈະເລີນເລື້ອຍສືບໄປ **ຊອບແລ້ວ!**

❊ **ເປີດ**ສາກ**ເດືອນສິງຫາ**ກັບ**ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 9** ຂອງສະພາປະຊາຊົນແຂວງ (ສພຂ) ເຊິ່ງຫຼາຍແຂວງກໍໄດ້ປິດລົງດ້ວຍຜົນສໍາເລັດຢ່າງຈົບງາມ ໄປຄຽງຄູ່ກັບການ**ປັບປຸງກົງຈັກການຈັດຕັ້ງຂັ້ນທ້ອງຖິ່ນ** ຕາມ**ລັດຖະທໍາມະນູນກໍານົດ** ແລະ ຫຼາຍແຂວງກໍກໍາລັງກະກຽມເປີດໃນມໍ່ໆນີ້ (ຊົມເຊີຍ) ຂໍຊື່ນຊົມກໍາອ້ຍອງ ນັກຂ່າວ **ສພຂ** ຍໍ່ຍົກເອົາຜົນງານ ສູ່ສາຍຕາປະຊາເຊື້ອ ເພື່ອໂຄສະນາເຜີຍແຜ່ໃຫ້ ໄຂຂອດຄວາມກະຈ່າງ ບ່ອນຖາງຂອດຄ້າງ ເພີ່ນອາງແຜນປັບແກ້ ເຂດຕົນບັ້ນບ່ອນຈັ່ງໃດ **ບັ້ນແລ້ວ!**

## ຊວນຍິ້ມ

# ພົ້ງລຶ້ງ

### ເລື່ອງ: ຮີບມາ

ມີຜົວເມຍຄູ່ໜຶ່ງ ໄປຍ່າງຫຼິ້ນຫ້າງສັນພະສິນຄ້າແຫ່ງໜຶ່ງ ແລ້ວເກີດພັດຫຼົງກັນ,ຜູ້ເປັນເມຍທົ່ວເຄິ່ງອີລຸງຕຸງບັງພ້ອມກັບຈັບໂທລະສັບ ໂທຫາຜູ້ເປັນຜົວ

"ແມ່ນເຈົ້າຢູ່ໃສເກາະ ຂ້ອຍຊອກເຈົ້າຈັ່ງໃດກະບໍ່ເຫັນ"

ຜູ້ເປັນຜົວກະຕອບແບບບົ່ງໆເບີບໆວ່າ:

"ເຈົ້າຈື່ຮ້ານຄໍາທີ່ເຈົ້າຢາກໄດ້ແຫວນ ມື້ຕອນເຮົາກຽມແຕ່ງດອງຫັ້ນບໍ່ ທີ່ຂ້ອຍສັນຍາໄວ້ວ່າມີເງິນມື້ໃດຊິຊື້ໃຫ້"

ຜູ້ເປັນເມຍໄດ້ຍິນ ກໍຍິ້ມນ້ອຍຍິ້ມໃຫຍ່ຢ່າງດີໃຈ ແລ້ວຕອບໄປວ່າ: ໂດຍ ຂ້ອຍຈື່ໄດ້ອ້າຍ

"ໂອເຄ ຊັ້ນກະດີ, ຢູ່ກົງກັນຂ້າມມີຮ້ານກາເຟ ຂ້ອຍນັ່ງກິນກາເຟຢູ່ນີ້ແຫຼະ, ຮີບມາ"

???



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າຊື້ຄວາຍຍາມນາ
ຢ່າຊື້ເສື້ອຜ້າຍາມໜາວ

ລັດຖະສະພາຕ່າງປະເທດ

# ຫວຽດນາມ ຈັດກອງປະຊຸມຄະນະກຳມະການເລືອກຕັ້ງຄັ້ງທຳອິດ

(Xinhua) - ວັນພຸດທີ 9 ກໍລະກົດຜ່ານມາ, ຄະນະກຳມະການເລືອກຕັ້ງແຫ່ງຊາດຫວຽດນາມ ໄດ້ຈັດກອງປະຊຸມຄັ້ງທຳອິດ ເພື່ອເລີ່ມຕົ້ນການກະກຽມການເລືອກຕັ້ງທົ່ວໄປທີ່ຈະມາເຖິງເຊິ່ງກຳນົດໄວ້ໃນວັນທີ 15 ມີນາ 2026 ໂດຍຈະມີການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ XVI ແລະ ສະພາປະຊາຊົນທຸກຂັ້ນ ສຳລັບອາຍຸການໄລຍະປີ 2026-2031.

ປະທານສະພາແຫ່ງຊາດ ເຈີ່ນ ແທ່ງ ເໝີນ ກ່າວວ່າ: ການເລືອກຕັ້ງທີ່ຈະມາເຖິງນີ້ ຈະດຳເນີນພາຍໃຕ້ຮູບແບບການປົກຄອງທ້ອງຖິ່ນ 2 ຂັ້ນໃໝ່ ເຊິ່ງເປັນການປ່ຽນແປງດ້ານໂຄງປະກອບການຈັດຕັ້ງທີ່ສຳຄັນ ທີ່ຮຽກຮ້ອງໃຫ້ມີການປັບປຸງການນຳພາແລະຍຸດທະສາດການຈັດຕັ້ງທີ່ທັນສະໄໝ; ຄະນະກຳມະການດັ່ງກ່າວ ມີແຜນທີ່ຈະເຊື່ອມໂຍງເຕັກໂນໂລຊີດິຈິຕອນ, ລວມທັງການນຳໃຊ້ແອັບພລິເຄຊັນຢັ້ງຢືນຕົວຕົນດິຈິຕອນແຫ່ງຊາດ ແລະ ນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານຕະຫຼອດທຸກຂັ້ນຕອນຂອງການເລືອກຕັ້ງ.




# ປະທານ NPC ເນັ້ນໜັກເຖິງວຽກງານນິຕິບັນຍັດທີ່ມີຄຸນນະພາບສູງ

(Xinhua)-ທ່ານຈ້າວ ເລີ້ຈີ້ກຳມະການຄະນະປະຈຳກົມການເມືອງສູນກາງພັກກອມມູນິດຈີນ, ປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ໄດ້ຮຽກຮ້ອງໃຫ້ບັນດາສະມາຊິກສະພາ ຮັບປະກັນການປະຕິບັດວຽກງານຂອງຕົນດ້ວຍຄຸນນະພາບສູງ ທັງໃນດ້ານນິຕິບັນຍັດ, ການຕິດຕາມກວດກາແລະການເປັນຕົວແທນ ເຊິ່ງຈະເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ XIV (2021-2025) ໃຫ້ປະສົບຜົນສຳເລັດ; ທ່ານກ່າວຄຳເຫັນດັ່ງກ່າວໃນລະຫວ່າງການເຄື່ອນໄຫວຢ້ຽມຢາມແຂວງຊິງໄຫ່ (Qinghai) ທາງພາກຕາເວັນຕົກສຽງເໜືອຂອງຈີນ ແຕ່ວັນອາທິດທີ 6 ຫາວັນອັງຄານທີ 8 ກໍລະກົດຜ່ານມາ.

ໃນໄລຍະຢ້ຽມຢາມນະຄອນຊີໜິງ (Xining) ແລະ ໄຫ່ຕົງ (Haidong), ທ່ານໄດ້ໄປສະຖານທີ່ເຮັດວຽກຂອງສະມາຊິກສະພາ, ບັນດາວິສາຫະກິດ ແລະ ເຂດຊົນນະບົດ ເພື່ອແລກປ່ຽນຄຳເຫັນກັບບັນດາສະມາຊິກສະພາ ແລະ ປະຊາຊົນໃນທ້ອງຖິ່ນ ເພື່ອຮັບຟັງຄວາມຄິດເຫັນ ແລະ ຄຳແນະນຳກ່ຽວກັບການສົ່ງເສີມການພັດທະນາວຽກງານນິຕິບັນຍັດທີ່ມີຄຸນນະພາບສູງ.



ທ່ານເນັ້ນໜັກເຖິງຄວາມສຳຄັນຂອງສະພານິຕິບັນຍັດທີ່ຢຶດໝັ້ນການນຳພາລວມຂອງພັກ ແລະ ຮັບປະກັນບັນດານະໂຍບາຍ, ມະຕິ ແລະ ຄຳສັ່ງສຳຄັນຂອງພັກ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຄົບຖ້ວນໃນວຽກງານນິຕິບັນຍັດ;ຮຽກຮ້ອງໃຫ້ສະພານິຕິບັນຍັດທຸກຂັ້ນຂອງແຂວງຊິງໄຫ່ເອົາໃຈໃສ່ປົກປັກຮັກສາສິ່ງແວດລ້ອມທາງນິເວດວິທະຍາຂອງແຂວງໃຫ້ດີຂຶ້ນໂດຍການປະຕິບັດລະບຽບກົດໝາຍ, ໂດຍສະເພາະແມ່ນເຂດຊານຈຽງຢວນ (Sanjiangyuan) ເຊິ່ງເປັນທີ່ຮູ້ຈັກໃນນາມ "ຫໍສິ່ງນ້ຳຂອງຈີນ" ແລະ ເປັນທີ່ຕັ້ງຂອງແມ່ນ້ຳແຢງຊີ, ແມ່ນ້ຳເຫຼືອງ ແລະ ແມ່ນ້ຳລ້ານຊ້າງ.

ທ່ານເນັ້ນໜັກເຖິງຄວາມຈຳເປັນຕ້ອງຢຶດໝັ້ນໃນຫຼັກໝັ້ນທີ່ຖືປະຊາຊົນເປັນສູນກາງແລະປະຕິບັດຕາມລະບອບປະຊາທິປະໄຕທົ່ວປວງຊົນຢ່າງມີສະຕິ, ຮຽກຮ້ອງໃຫ້ບັນດາສະມາຊິກສະພາດຳເນີນການຄົ້ນຄວ້າຢ່າງເລິກເຊິ່ງ ແລະ ຂໍຄຳເຫັນ ແລະ ຂໍ້ສະເໜີຈາກທຸກຂະແໜງການຢ່າງກວ້າງຂວາງ; ເນັ້ນໜັກວ່າສະມາຊິກສະພາ ຄວນປະຕິບັດໜ້າທີ່ຂອງຕົນຕາມລັດຖະທຳມະນູນແລະກົດໝາຍອື່ນໆຢ່າງເຂັ້ມງວດ ໂດຍເນັ້ນໜັກເຖິງຄວາມຈຳເປັນໃນການເພີ່ມທະວີວຽກງານຕິດຕາມກວດກາຂອງ NPC ດ້ວຍການປະຕິບັດກົດໝາຍວ່າດ້ວຍການກວດກາສະບັບປັບປຸງຢ່າງຄົບຖ້ວນ.

ນອກຈາກນີ້, ທ່ານຍັງຮຽກຮ້ອງໃຫ້ເພີ່ມທະວີການພັດທະນາຕົນເອງຂອງສະພາຜູ້ແທນປະຊາຊົນ ແລະ ປະຕິບັດມະຕິ 8 ຂໍ້ຂອງການນຳສູນກາງພັກກ່ຽວກັບການປັບປຸງການເຄື່ອນໄຫວວຽກງານຂອງຕົນ; ທ່ານກ່າວວ່າ ສິ່ງນີ້ ຈະຊ່ວຍສ້າງບັນຍາກາດທີ່ສະອາດ, ທ່ຽງທຳ ແລະ ເອື້ອອຳນວຍຕໍ່ການດຳເນີນທຸລະກິດ, ເຊິ່ງຈະເພີ່ມທະວີຄວາມສາມາດດ້ານກົດໝາຍແລະປະສິດທິພາບຂອງສະພາຜູ້ແທນປະຊາຊົນຢ່າງຕໍ່ເນື່ອງ.

# EP ອະນຸມັດລະບົບກວດຄົນເຂົ້າເມືອງອັດຕະໂນມັດ ສຳລັບບຸກຄົນນອກ EU




(AFP) - ວັນທີ 9 ກໍລະກົດຜ່ານມາ, ລັດຖະສະພາເອີຣົບ (EP) ໄດ້ອະນຸມັດລະບົບກວດກາຊາຍແດນແບບໃໝ່ ເຊິ່ງຈະຍົກເລີກຕາປະທັບໃນໜັງສືຜ່ານແດນສຳລັບພົນລະເມືອງທີ່ບໍ່ໄດ້ມາຈາກສະຫະພາບເອີຣົບ (EU).

ໃນເບື້ອງຕົ້ນ, ລະບົບການເຂົ້າ-ອອກປະເທດ "Entry/Exit System" ຫຼື EES ຄວນເລີ່ມນຳໃຊ້ເມື່ອເດືອນພະຈິກ 2024, ແຕ່ມີການເລື່ອນອອກໄປກ່ອນເນື່ອງຈາກວ່າຫຼາຍປະເທດຍັງບໍ່ພ້ອມ ໂດຍລະບົບດັ່ງກ່າວຈະຊ່ວຍບັນທຶກວັນທີເຂົ້າ-ອອກຂອງຜູ້ມາຢ້ຽມຢາມ, ພ້ອມທັງຕິດຕາມການຢູ່ເກີນວີຊາ ແລະ ການຖືກປະຕິເສດການເຂົ້າປະເທດ; ຂະນະດຽວກັນ, ຜູ້ທີ່ເດີນທາງເຂົ້າມາໃນເຂດເຊງເກັນ (Schengen) ຍັງຈະຕ້ອງໄດ້ຜ່ານຂັ້ນຕອນການເກັບກຳຂໍ້ມູນ biometrics ເຊັ່ນຮູບຖ່າຍໃບໜ້າ ແລະ ລາຍນິ້ວມື.

ຈຸດປະສົງຂອງ EP ແມ່ນເພື່ອຍົກລະດັບຄວາມປອດໄພ, ເລັ່ງຂະບວນການກວດກາຊາຍແດນ ແລະ ຫຼຸດຈຳນວນການຕໍ່ແຖວ; ຢ່າງໃດກໍຕາມ, ມີຄວາມກັງວົນວ່າການຈັດຕັ້ງປະຕິບັດຢ່າງຮີບດ່ວນ ອາດຈະເຮັດໃຫ້ຜູ້ທີ່ເດີນທາງໄປເອີຣົບໂດຍລົດໄຟ, ເຮືອຂ້າມຟາກ ແລະ ຍົນ ຕ້ອງລໍຖ້າຢູ່ໃນແຖວດົນກວ່າ.

ໂຄງການດັ່ງກ່າວຈະມີຜົນບັງຄັບໃຊ້ຈິງໃນທາງປະຕິບັດພາຍໃນໄລຍະເວລາອີກ 6 ເດືອນ; ເຖິງແນວໃດກໍຕາມ, ຄະນະກຳມະເອີຣົບ ຈະເປັນຜູ້ກຳນົດວັນເລີ່ມນຳໃຊ້ອີກຄັ້ງ.

ໃນເບື້ອງຕົ້ນ, ສະມາຊິກ EU ຈະເລັ່ງດຳເນີນການນຳໃຊ້ລະບົບ EES ໃຫ້ໄດ້ຢ່າງໜ້ອຍເຄິ່ງໜຶ່ງພາຍໃນ 3 ເດືອນ; ຫຼັງຈາກນັ້ນ 3 ເດືອນ, ສະມາຊິກທຸກປະເທດ ຕ້ອງສຳເລັດການປັບປຸງລະບົບທີ່ກ່ຽວຂ້ອງພາຍໃນ 6 ເດືອນ.

# ຜູ້ມີສິດເລືອກຕັ້ງຂອງປາກິດສະຖານ ລົງທະບຽນແລ້ວຫຼາຍກວ່າ 134 ລ້ານ

(Xinhua) - ຄະນະກຳມະການເລືອກຕັ້ງຂອງປາກິດສະຖານ ຖະແຫຼງເມື່ອວັນພຸດທີ 9 ກໍລະກົດຜ່ານມາວ່າ ຈຳນວນຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວທົ່ວປະເທດ ສູງເຖິງ 134.43 ລ້ານຄົນ ໃນນັ້ນ, ເພດຊາຍ 72.12 ລ້ານຄົນ ແລະ ເພດຍິງ 62.30 ລ້ານຄົນ.




ແຂວງປັນຈາບ (Punjab) ທາງພາກຕາເວັນອອກ ມີຜູ້ມີສິດເລືອກຕັ້ງຫຼາຍທີ່ສຸດ ໂດຍມີຜູ້ລົງທະບຽນແລ້ວຫຼາຍກວ່າ 76.50 ລ້ານຄົນ, ແຂວງສິນ ຫຼື ສິນທຸ (Sindh) ທາງພາກໃຕ້ ຕາມມາດ້ວຍ 28.17 ລ້ານຄົນ, ໃນຂະນະທີ່ແຂວງໄຄເບີ ປັກຕູນຄວາ (Khyber Pakhtunkhwa) ທາງພາກຕາເວັນຕົກສຽງເໜືອ ມີ 22.87 ລ້ານຄົນ.

ແຂວງບາໂລຈິດສະຖານ (Balochistan) ທາງພາກຕາເວັນຕົກສຽງໃຕ້ ທີ່ມີພົນລະເມືອງໜ້ອຍທີ່ສຸດຂອງປະເທດ ມີຜູ້ລົງທະບຽນແລ້ວ 5.61 ລ້ານຄົນ.

# ເຫຼົ້າໄວ້ ໄດ້ຂົ້ນຊົນ

❖ ວິເສດ ສະແຫວງສຶກສາ

## ນະໂຍບາຍປ້ອງກັນສະກຸນເງິນ ແລະ ການສະຫງວນອາຊີບ

ໃນບົດຄວາມປະຈຳວັນນີ້ ມີເນື້ອໃນທີ່ໜ້າສົນໃຈ 2 ເລື່ອງ ຈາກມາເລເຊຍ ປະເທດໃນຄອບຄົວໃຫຍ່ອາຊຽນຂອງພວກເຮົາ ມາແລກປ່ຽນກັບບັນດານັກອ່ານ "ຜູ້ແທນປະຊາຊົນ" ເລື່ອງທີ 1 ແມ່ນກ່ຽວກັບການປ້ອງກັນສະກຸນເງິນແຫ່ງຊາດ ແລະ ເລື່ອງທີ 2 ກ່ຽວກັບນະໂຍບາຍສະຫງວນອາຊີບ

ສຳລັບຫົວຂໍ້ທີ 1 ວ່າດ້ວຍການປ້ອງກັນສະກຸນເງິນ "ຣິງກິດ" ຂອງມາເລເຊຍ ນັ້ນ, ທາງການໄດ້ມີນະໂຍບາຍທີ່ຊານສະຫຼາດແລະລະອຽດລະອໍຜໍສົມຄວນ ໂດຍເນັ້ນລະບົບການຖອກເງິນຊຳລະຂອງເຫຼົ່າຜູ້ປະກອບການ. ໃນໄລຍະຜ່ານມາ, ຜູ້ປະກອບການ (ນັກທຸລະກິດ-ຜູ້ລົງທຶນ) ສົ່ງອອກ ມີພັນທະຖອກເງິນລາຍຮັບຂອງຕົນເຂົ້າປະເທດ ພາຍໃນ 3 ເດືອນ ຫຼັງຈາກສຳເລັດການດຳເນີນທຸລະກິດ ໂດຍໄດ້ອະນຸຍາດໃຫ້ຖອກເປັນເງິນຕາຕ່າງປະເທດໄດ້; ແຕ່ໃນຕົວຈິງ, ບັນດານັກທຸລະກິດນັ້ນ ຫົວໃສບໍ່ແມ່ນຂອງຢອກ, ພວກເຂົາເລືອກຖອກເປັນເງິນຣິງກິດ (ສະກຸນເງິນແຫ່ງຊາດມາເລເຊຍ) ແລະ ຮັກສາເງິນໂດລາໄວ້ ເພາະມີຄວາມເຊື່ອວ່າເງິນໂດລາຈະມີຄ່ານັບມື້ນັບແຂງຂຶ້ນໃນໄລຍະຍາວ. ໃນປີ 2015 ເງິນສະກຸນຣິງກິດອ່ອນຕົວລົງເປັນປະຫວັດການ ແລະ ສາເຫດໜຶ່ງກໍແມ່ນຍ້ອນບັນດານັກທຸລະກິດເກັບສະສົມເງິນໂດລາເອົາໄວ້. ດ້ວຍເຫດຜົນນີ້ເອງ, ໃນທ້າຍປີ 2016 (ຕາມແຫຼ່ງຂ່າວ KPL 6/12/2016) ທາງການຂອງມາເລເຊຍ ຈຶ່ງໄດ້ອອກມາດຕະການເພື່ອນຳໃຊ້ເງິນຣິງກິດເພີ່ມຂຶ້ນ ແນໃສ່ຫຼຸດຜ່ອນຄວາມສ່ຽງທີ່ສະກຸນເງິນແຫ່ງຊາດຈະຖືກຄອບງຳໂດຍອິດທິພົນຂອງເງິນໂດລາສະຫະລັດ; ອີກໜຶ່ງໃນມາດຕະການລະອຽດກໍຄື ທະນາຄານກາງຂອງມາເລເຊຍ ຍັງໄດ້ຈຳກັດຈຳນວນສະກຸນເງິນຕາຕ່າງປະເທດໃຫ້ຢູ່ໃນມູນຄ່າທີ່ຄິດໄລ່ເປັນເງິນຣິງກິດ ຈຳນວນ 50 ລ້ານຣິງກິດ ສຳລັບການລົງທຶນໂດຍອີງການຈັດຕັ້ງ ແລະ ໃນມູນຄ່າ 1 ລ້ານຣິງກິດ ສຳລັບການລົງທຶນສ່ວນບຸກຄົນ. ຕໍ່ມາໃນຕົ້ນປີ 2018, ທ່ານ ມາຮາເທຍ ໂມຮາມັດ ເຊິ່ງເປັນນາຍົກລັດຖະມົນຕີມາເລເຊຍ ໃນເວລານັ້ນ ກໍໄດ້ປະກາດແຜນຕັດເງິນເດືອນພະນັກງານຂັ້ນສູງລົງ ເພື່ອເອົາເງິນໄປປະກອບສ່ວນແກ້ໄຂຄວາມຫຍຸ້ງຍາກທາງເສດຖະກິດ, ແຜນຕັດເງິນເດືອນເພື່ອຊ່ວຍຊາດນີ້ ດຳເນີນໄປແບບສະໝັກໃຈ ບໍ່ມີການບັງຄັບ ໂດຍໄດ້ປະຕິບັດໄປພ້ອມໆກັບມາດຕະການປັບປຸງຂະໜາດຂອງຄະນະລັດຖະບານ ໃຫ້ມີຈຳນວນໜ້ອຍລົງ ແຕ່ມີປະສິດທິພາບ.

ເລື່ອງທີ 2 ແມ່ນນະໂຍບາຍສະຫງວນອາຊີບໄວ້ໃຫ້ພົນລະເມືອງມາເລເຊຍ. ນະໂຍບາຍນີ້ມີເປົ້າໝາຍຕົ້ນຕໍ 2 ຢ່າງຄື: 1. ເພື່ອຫຼຸດຜ່ອນເທື່ອລະກ້າວການນຳເຂົ້າແຮງງານຕ່າງປະເທດ. ມາເລເຊຍ ເປັນປະເທດໜຶ່ງໃນອາຊຽນ ທີ່ກາງຕໍ່ແຮງງານຕ່າງປະເທດຢ່າງຫຼວງຫຼາຍ ເພາະຄົນມາເລເຊຍເອງ ບໍ່ນິຍົມເຮັດວຽກໃນຂົງເຂດກໍ່ສ້າງ, ວຽກອະນາໄມ ແລະ ວຽກກະສິກຳ ຈົນເຖິງຂັ້ນຜູ້ນຳຂອງປະເທດໄດ້ອອກມາເຕືອນຄົນມາເລເຊຍບໍ່ໃຫ້ຣິວຽກເກີນໄປ ບໍ່ດັ່ງນັ້ນກໍຈະບໍ່ສາມາດຫຼຸດຜ່ອນການນຳເຂົ້າແຮງງານຕ່າງປະເທດ. ເຫດຜົນໂຕທີ 2 ໃນການສະຫງວນອາຊີບນັ້ນ ກໍແມ່ນເພື່ອຈັດສັນອາຊີບທີ່ຄົນມາເລເຊຍມີຄວາມສາມາດເຮັດເອງ ກໍຄືອາຊີບທີ່ຄົນພາຍໃນປະເທດມີມູນເຊື້ອເຮັດມາຫຼາຍເຊັ່ນຄົນ-ເປັນອາຊີບພູມປັນຍາທີ່ຄວນອະນຸລັກ ເຊັ່ນ: ຊ່າງສີມື, ຕັດຜົມ-ແຕ່ງຜົມ, ຫຍິບແສ່ວ, ຊ່າງຕີຄຳ-ຕີເງິນ, ຊັກເຄື່ອງ ແລະ ອື່ນໆ; ສຳລັບອາຊີບຕັດຜົມນັ້ນ ມາເລເຊຍ ໄດ້ອາໄສຊ່າງຕັດຜົມຈາກອິນເດຍມານານກວ່າ 100 ປີແລ້ວ ດັ່ງນັ້ນ, ການສະຫງວນອາຊີບນີ້ໄວ້ໃຫ້ຄົນພາຍໃນເອງເຮັດນັ້ນ ໃນເບື້ອງຕົ້ນໄດ້ເຮັດໃຫ້ຮ້ານຕັດຜົມຈຳນວນບໍ່ໜ້ອຍປິດກິດຈະການລົງ. ນະໂຍບາຍສະຫງວນອາຊີບຂອງມາເລເຊຍ ໄດ້ເລີ່ມປະຕິບັດເປັນກ້າວໆ ນັບແຕ່ປີ 2021 ພຸ້ນ.

ທະນາຄານພັດທະນາລາວ
LDB Bank




## ຄວາມເມດຕາທີ່ຝືນໃຈ

#ບ່າວກະບື

| | |
|---|---|
| ຄູ: | "ເປັນຫຍັງພວກເຈົ້າຈຶ່ງມາໂຮງຮຽນຊ້າ?" |
| ດົກ ແລະ ລານ: | "ພວກຂ້ານ້ອຍຊ່ວຍແມ່ເຖົ້າຄົນໜຶ່ງຂ້າມທາງ" |
| ຄູ: | "ຊ່ວຍຂ້າມທາງກໍດົນປານນັ້ນພຸ້ນຫວະ?" |
| ດົກ ແລະ ລານ: | "ເລື່ອງມີຢູ່ວ່າ... ແມ່ເຖົ້າຄົນນັ້ນລາວ ບໍ່ຢາກຂ້າມທາງຊັ້ນບ່າ" |

## Chicken Thief

#BAOKBU

| | |
|---|---|
| Teacher: | "Why are you late to class ?" |
| Dok & Lanh: | "We helped an old lady cross the road." |
| Teacher: | "But did it take you so long?" |
| Dok & Lanh: | "The point is she didn't want to cross the road." |

## ຕາມພາສາ ກາຕູນ



ຈຸດຂີ້ເຫຍື້ອໃນຕົວເມືອງ ອາກາດເປັນພິດຍ້ອນຄິດເຫັນແກ່ໂຕ

● ໂດຍ : ພູຜາ



## ກຜຽສ...

(ຕໍ່ຈາກໜ້າ 3)

ຮອງຫົວໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ໄດ້ພ້ອມກັນລົງເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 5 ປີ ຄັ້ງທີ IX ແລະ ການຈັດຕັ້ງປະຕິ ບັດແຜນການລົງທຶນຂອງລັດປີ 2025, ການຈັດເກັບລາຍຮັບຈາກການສົ່ງອອກແຮ່ທາດ ແລະການຈັດຕັ້ງປະຕິບັດການແກ້ໄຂຜົນການກວດກາຕາມຜົນການກວດສອບຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ